ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------------

ສະພາແຫ່ງຊາດ ເລກທີ 04 / ສພຊ

ນະຄອນຫລວງວຽງຈັນ, ວັນທີ 26 ທັນວາ 2006

# ກົດໝາຍ
# ວ່າດ້ວຍອາກອນມູນຄ່າເພີ່ມ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ກຳນົດ ຫລັກການ, ລະບຽບການ, ວິທີການ, ມາດຕະການ ກ່ຽວກັບອາກອນມູນຄ່າເພີ່ມ ເພື່ອເກັບພັນທະຈາກຜູ້ຊົມໃຊ້ເຂົ້າງົບປະມານແຫ່ງລັດ ແນໃສ່ຊຸກຍູ້ການຜະລິດ, ທຸລະກິດ, ເປີດກວ້າງການຈໍລະຈອນ ສິນຄ້າ ແລະການບໍລິການ ໃຫ້ໄປຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະເຊື່ອມໂຍງເຂົ້າກັບພາກພື້ນ ແລະສາກົນ.

**ມາດຕາ 2. ອາກອນມູນຄ່າເພີ່ມ**

ອາກອນມູນຄ່າເພີ່ມ ແມ່ນອາກອນທາງອ້ອມ ທີ່ຄິດໄລ່ເກັບຕາມພູດສ່ວນມູນຄ່າເພີ່ມຂຶ້ນ ຂອງສິນຄ້າ, ເຄື່ອງຂອງ ແລະ ການບໍລິການ ຊຶ່ງເກີດຂຶ້ນໃນທຸກຂະບວນການ ນັບແຕ່ຂອດການຜະລິດ, ການຈໍລະຈອນ, ການສະໜອງບໍລິການ ໄປຈົນເຖິງການຊົມໃຊ້ ແລະເກັບຕາມມູນຄ່າສິນຄ້າ, ເຄື່ອງຂອງ ແລະການບໍລິການທີ່ນຳເຂົ້າມາໃນດິນແດນຂອງ ສປປ ລາວ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້ :

1. ***ເປົ້າໝາຍສິ່ງທີ່ຖືກເສຍອາກອນ*** ໝາຍເຖິງ ສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ນຳໃຊ້ເຂົ້າສູ່ການຜະລິດ, ທຸລະກິດ ແລະ ຊົມໃຊ້, ທີ່ຈຳໜ່າຍ ຫລື ສະໜອງ ຢູ່ ສປປ ລາວ;

2. **ເປົ້າໝາຍຜູ້ທີ່ຕ້ອງມອບອາກອນ** ໝາຍເຖິງ ການຈັດຕັ້ງ ຫລື ນິຕິບຸກຄົນ ແລະບຸກຄົນ ທີ່ດຳເນີນທຸລະກິດ ຊຶ່ງເກັບຈາກຜູ້ຊົມໃຊ້ສຸດທ້າຍ ຕ້ອງມອບອາກອນມູນຄ່າເພີ່ມເຂົ້າງົບປະມານແຫ່ງລັດ;
3. **ການຈຳໜ່າຍສິນຄ້າເຄື່ອງຂອງ** ໝາຍເຖິງ ການມອບ-ໂອນສິດຊົມໃຊ້ສິນຄ້າ, ເຄື່ອງຂອງ ໃຫ້ຜູ້ອື່ນ ໂດຍມີຄ່າຕອບແທນ ເປັນເງິນ ຫລື ຜົນປະໂຫຍດຢ່າງອື່ນ;
4. **ການບໍລິການ** ໝາຍເຖິງ ການເຄື່ອນໄຫວເສດຖະກິດທີ່ເປັນການສະໜອງແຮງງານ ຫລື ວັດຖຸ, ອຸປະກອນ, ພາຫະນະ ໃຫ້ແກ່ຜູ້ອື່ນ ແລະ ໄດ້ຮັບຄ່າຕອບແທນ ເຊັ່ນ : ການຂົນສົ່ງ, ການໂທລະຄົມມະນາຄົມ, ການກໍ່ສ້າງ, ການສ້ອມແປງ, ການຮັບເໝົາຄຸ້ມຄອງຕະຫຼາດ, ການພັດທະນາທີ່ດິນເພື່ອຂາຍສິດນຳໃຊ້, ກິດຈະການໂຮງແຮມ, ການທ່ອງທ່ຽວ, ການກິນດື່ມ, ການບັນເທີງ, ການໃຫ້ຄຳປຶກສາ, ການເປັນນາຍໜ້າ ຫລື ຕົວແທນ ແລະ ກິດຈະການອື່ນໆ;
5. **ການນຳເຂົ້າ** ໝາຍເຖິງ ການນຳເອົາສິນຄ້າ, ເຄື່ອງຂອງ ຫລື ການບໍລິການ ລວມທັງການບໍລິການທີ່ຕິດພັນກັບການນຳເຂົ້າຈາກຕ່າງປະເທດ ເຂົ້າມາໃນ ສປປ ລາວ;
6. **ການສົ່ງອອກ** ໝາຍເຖິງ ການນຳເອົາສິນຄ້າ, ເຄື່ອງຂອງ ຫລື ການບໍລິການ ລວມທັງການບໍລິການ ທີ່ຕິດພັນກັບການສົ່ງອອກ ອອກຈາກ ສປປ. ລາວ;
7. **ກິດຈະການ ຫລື ຂະແໜງວິຊາຊີບທຸລະກິດ** ໝາຍເຖິງ ການດຳເນີນທຸລະກິດໃນຂົງເຂດການຜະລິດ ແລະການບໍລິການ ໃນຂະແໜງການຕ່າງໆ ເຊັ່ນ : ຂະແໜງການກະສິກຳ-ປ່າໄມ້, ຫັດຖະກຳ, ອຸດສາຫະກຳ-ການຄ້າ, ການຂຸດຄົ້ນ, ການຂົນສົ່ງ, ການທະນາຄານ ແລະອື່ນໆ;
8. **ຕົວແທນ ຫລື ຜູ້ຕາງໜ້າ** ໝາຍເຖິງ ບຸກຄົນ ຫລື ນິຕິບຸກຄົນ ຊຶ່ງເປັນຜູ້ໄດ້ຮັບມອບສິດຈາກບຸກຄົນ ຫລື ນິຕິບຸກຄົນອື່ນ ເພື່ອທຳການຕົກລົງ, ເຈລະຈາ ແລະເຊັນສັນຍາຕາງກ່ຽວກັບທຸລະກິດໃດໜຶ່ງ;
9. **ສະຖານທີ່ດຳເນີນທຸລະກິດຖາວອນ** ໝາຍເຖິງ ສະຖານທີ່ຕັ້ງຂອງກິດຈະການ ຊຶ່ງຜູ້ເສຍອາກອນໄດ້ນຳໃຊ້ເພື່ອເຄື່ອນໄຫວທຸລະກິດຢ່າງເປັນປົກກະຕິ. ຖືວ່າແມ່ນສະຖານທີ່ດຳເນີນທຸລະກິດຖາວອນ:ຫ້ອງການບໍລິຫານ, ສາຂາ, ໂຮງງານ, ສະຖານທີ່ຂຸດຄົ້ນ, ສະໜາມການກໍ່ສ້າງ ຫລື ສະຖານທີ່ ຊຶ່ງມີການກໍ່ສ້າງ ແລະທຸກສະຖານທີ່ ຊຶ່ງມີການເຄື່ອນໄຫວວຽກງານຕ່າງໆ;
10. **ອາກອນມູນຄ່າເພີ່ມໃນເບື້ອງສົ້ນເຂົ້າ ( ຫລື ສິນເຊື່ອອາກອນມູນຄ່າເພີ່ມ )** ໝາຍເຖິງ ຈຳນວນເງິນອາກອນມູນຄ່າເພີ່ມທີ່ຜູ້ເສຍອາກອນໄດ້ຈ່າຍໃນເວລາຊື້ສິນຄ້າ, ເຄື່ອງຂອງ ຫລື ການບໍລິການ ທີ່ນຳໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດ ຂອງຜູ້ດຳເນີນກິດຈະການ ທີ່ຖືກເສຍອາກອນມູນຄ່າເພີ່ມ;

11. **ອາກອນມູນຄ່າເພີ່ມໃນເບື້ອງສົ້ນອອກ** ໝາຍເຖິງ ຈຳນວນເງິນອາກອນທີ່ຄິດໄລ່ຈາກມູນຄ່າຂາຍຂອງ ສິນຄ້າ, ເຄື່ອງຂອງ ແລະການບໍລິການ ສົ້ນອອກ ທີ່ຖືກເສຍອາກອນມູນຄ່າເພີ່ມ;
12. **ອາກອນມູນຄ່າເພີ່ມຕ້ອງຈ່າຍ** ໝາຍເຖິງ ຈຳນວນເງິນອາກອນໃນເບື້ອງສົ້ນອອກ ລົບຈຳນວນເງິນອາກອນໃນເບື້ອງສົ້ນເຂົ້າ ຫລື ໝາຍເຖິງ ຈຳນວນເງິນອາກອນທີ່ຄິດໄລ່ຈາກສ່ວນເພີ່ມຂອງມູນຄ່າຂາຍສິນຄ້າ, ເຄື່ອງຂອງ ແລະການບໍລິການທີ່ຖືກເສຍອາກອນມູນຄ່າເພີ່ມ;
13. **ໄລຍະແຈ້ງເສຍອາກອນ** ໝາຍເຖິງ ໄລຍະການບັນຊີປະຈຳແຕ່ລະເດືອນ;
14. **ຜູ້ທີ່ບໍ່ມີພູມລຳເນົາ** ໝາຍເຖິງ ຜູ້ທີ່ບໍ່ມີທີ່ຢູ່ຖາວອນ ເພື່ອດຳລົງຊີວິດ, ທຳມາຫາກິນ ແລະດຳເນີນທຸລະກິດ ຢູ່ ສປປ ລາວ.

**ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບອາກອນມູນຄ່າເພີ່ມ**

ລັດວາງນະໂຍບາຍ ອາກອນມູນຄ່າເພີ່ມ ໄປຄຽງຄູ່ກັບນະໂຍບາຍອາກອນອື່ນໆ ເພື່ອແກ້ໄຂບັນຫາການເກັບອາກອນຊໍ້າຊ້ອນ, ສະກັດກັ້ນການຮົ່ວໄຫລລາຍຮັບງົບປະມານ, ດຳເນີນໄປເປັນແຕ່ລະບາດກ້າວແຕ່ຕໍ່າຫາສູງ ແນໃສ່ຊຸກຍູ້ ການຜະລິດ ແລະການບໍລິການ, ການສົ່ງອອກ, ສົ່ງເສີມການລົງທຶນພາຍໃນ ແລະຕ່າງປະເທດ ເຮັດໃຫ້ ງົບປະມານແຫ່ງລັດເຂັ້ມແຂງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃຫ້ມີການຂະຫຍາຍຕົວ ຢ່າງຕໍ່ເນື່ອງ.

**ມາດຕາ 5. ພັນທະຂອງບຸກຄົນ ແລະ ການຈັດຕັ້ງກ່ຽວກັບອາກອນມູນຄ່າເພີ່ມ**

ອາກອນມູນຄ່າເພີ່ມ ແມ່ນພັນທະຂອງຜູ້ຊົມໃຊ້ສຸດທ້າຍ ສິນຄ້າ, ເຄື່ອງຂອງ ແລະການບໍລິການ. ຜູ້ດຳເນີນທຸລະກິດເປັນຜູ້ຄິດໄລ່ອາກອນມູນຄ່າເພີ່ມໃສ່ໃນລາຄາ ເມື່ອຂາຍສິນຄ້າ, ເຄື່ອງຂອງ ແລະການບໍລິການ ໃຫ້ຜູ້ຊົມໃຊ້ເສຍ ແລ້ວມອບເຂົ້າງົບປະມານແຫ່ງລັດ.

ບຸກຄົນ, ການຈັດຕັ້ງ ແລະນິຕິບຸກຄົນ ທີ່ຊົມໃຊ້ ຫລື ນຳເຂົ້າ ສິນຄ້າ, ເຄື່ອງຂອງ ແລະການບໍລິການຕ້ອງປະຕິບັດພັນທະເສຍອາກອນມູນຄ່າເພີ່ມໃຫ້ລັດ ຕາມລະບຽບກົດໝາຍຢ່າງຖືກຕ້ອງ ແລະຄົບຖ້ວນ.

**ມາດຕາ 6. ຂອບເຂດການນຳໃຊ້ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ**

ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ນຳໃຊ້ຕໍ່ບຸກຄົນ, ການຈັດຕັ້ງ ແລະນິຕິບຸກຄົນ ທັງພາຍໃນ ແລະຕ່າງປະເທດ ທີ່ດຳເນີນທຸລະກິດ, ການຜະລິດ ແລະການບໍລິການ ຢູ່ດິນແດນຂອງ ສປປ ລາວ ຕາມທີ່ກົດໝາຍສະບັບນີ້ໄດ້ກຳນົດໄວ້.

**ມາດຕາ 7. ການພົວພັນຮ່ວມມືສາກົນ**

ລັດຖະບານເປີດກວ້າງ ແລະສົ່ງເສີມໃຫ້ມີການພົວພັນຮ່ວມມືກັບຕ່າງປະເທດ ແລະສາກົນ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ ເພື່ອພັດທະນາຂີດຄວາມສາມາດວຽກງານອາກອນມູນຄ່າເພີ່ມ ດ້ວຍການແລກປ່ຽນບົດ

ຮຽນທາງດ້ານເຕັກນິກ, ວິຊາການ, ການພັດທະນາຊັບພະຍາກອນມະນຸດ, ການແລກປ່ຽນຂໍ້ມູນຂ່າວສານ, ການອຳນວຍຄວາມສະດວກດ້ານອື່ນໆ ຕາມສັນຍາ ຫລື ສົນທິສັນຍາສາກົນ ທີ່ ສປປ ລາວ ໄດ້ລົງນາມ ຫລື ໄດ້ເຂົ້າຮ່ວມເປັນພາຄີ.

## ພາກທີ II
## ລະບຽບການກ່ຽວກັບອາກອນມູນຄ່າເພີ່ມ

### ໝວດທີ 1
### ເປົ້າໝາຍສິ່ງທີ່ຖືກເສຍ ແລະ ເປົ້າໝາຍຜູ້ທີ່ຕ້ອງມອບອາກອນມູນຄ່າເພີ່ມ

**ມາດຕາ 8. ເປົ້າໝາຍສິ່ງທີ່ຖືກເສຍອາກອນມູນຄ່າເພີ່ມ**

ສິນຄ້າ, ເຄື່ອງຂອງ ແລະ ການບໍລິການ ທີ່ນຳໃຊ້ເຂົ້າສູ່ການຜະລິດ, ທຸລະກິດ ແລະການຊົມໃຊ້ຢູ່ ສປປ ລາວ ລວມທັງການຊົມໃຊ້ດ້ວຍຕົນເອງ, ການນຳໃຊ້ເຂົ້າໃນກິດຈະການທີ່ບໍ່ແມ່ນທຸລະກິດ ແລະມອບໃຫ້ແກ່ບຸກຄົນອື່ນ ແລະຄົນງານຂອງຕົນ ໂດຍບໍ່ຄິດໄລ່ມູນຄ່າ ແມ່ນເປົ້າໝາຍສິ່ງທີ່ຖືກເສຍອາກອນມູນຄ່າເພີ່ມ ຍົກເວັ້ນກໍລະນີທີ່ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍສະ ບັບນີ້.

**ມາດຕາ 9. ເປົ້າໝາຍຜູ້ທີ່ຕ້ອງມອບອາກອນມູນຄ່າເພີ່ມ**

ເປົ້າໝາຍຜູ້ທີ່ຕ້ອງມອບອາກອນມູນຄ່າເພີ່ມ ແມ່ນບຸກຄົນ, ການຈັດຕັ້ງ ແລະ ນິຕິບຸກຄົນ ດັ່ງນີ້:

1. ຜູ້ດຳເນີນທຸລະກິດ ຊຶ່ງປະກອບດ້ວຍຜູ້ດຳເນີນການຜະລິດ ສິນຄ້າ, ເຄື່ອງຂອງ ແລະການບໍລິການ ຊຶ່ງມີລາຍຮັບທຸລະກິດປະຈຳປີ ສູງກວ່າ ຫລື ເທົ່າກັບ ລະດັບທີ່ກຳນົດໃຫ້ເຂົ້າໃນລະບົບອາກອນມູນຄ່າເພີ່ມ ດັ່ງທີ່ໄດ້ບົ່ງໄວ້ໃນວັກທີ 1 ຂອງມາດຕາ 13 ຫລື ມີລາຍຮັບທຸລະກິດ ປະຈຳປີຕ່ຳກວ່າລະດັບທີ່ກຳນົດໄວ້ ແຕ່ຂໍເຂົ້າໃນລະບົບອາກອນມູນຄ່າເພີ່ມ ດ້ວຍຄວາມສະໝັກໃຈ ຕາມມາດຕາ 15 ຂອງກົດໝາຍສະບັບນີ້;
2. ຜູ້ນຳເຂົ້າສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ຖືກເສຍອາກອນມູນຄ່າເພີ່ມ ໂດຍບໍ່ຈຳແນກວ່າແມ່ນເພື່ອຈຸດປະສົງຂອງການດຳເນີນທຸລະກິດ ຫລື ການຊົມໃຊ້ສ່ວນຕົວ ຊຶ່ງມີລັກສະນະຕໍ່ເນື່ອງ ຫລື ເປັນບາງຄັ້ງຄາວ;
3. ຜູ້ທີ່ບໍ່ມີພູມລຳເນົາ ແລະບໍ່ໄດ້ຂຶ້ນທະບຽນອາກອນຢູ່ ສປປ ລາວ ທີ່ມີການສະໜອງການ ບໍລິການທຸກໆເທື່ອໃຫ້ແກ່ລູກຄ້າ ຢູ່ ສປປ ລາວ ລ້ວນແຕ່ຕ້ອງເສຍອາກອນມູນຄ່າເພີ່ມ ຕາມມາດຕາ 29 ຂອງກົດໝາຍສະບັບນີ້ ດ້ວຍວິທີການກຳນົດຕົວເລກລາຍຮັບທຸລະກິດ ເພື່ອຄິດໄລ່ມູນຄ່າທີ່ຖືກເສຍອາກອນມູນຄ່າເພີ່ມ ສະເພາະໃນພູດສ່ວນທີ່ດຳເນີນການຜ່ານສະຖານທີ່ປະກອບທຸລະກິດຖາວອນ ຢູ່ ສປປ ລາວ.

**ມາດຕາ 10. ການຍົກເວັ້ນອາກອນມູນຄ່າເພີ່ມ**

ສິນຄ້າ, ເຄື່ອງຂອງ ແລະ ການບໍລິການຕ່າງໆຂ້າງລຸ່ມນີ້ ລ້ວນແຕ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ :

1. ຜົນຜະລິດກະສິກຳ ທີ່ຍັງບໍ່ທັນຜ່ານການປຸງແຕ່ງ, ຜະລິດຕະພັນຫັດຖະກຳ ໂດຍຊາວກະສິກອນ, ລັດຖະກອນ ແລະສະມາຊິກສະຫະກອນຕ່າງໆ ທີ່ຜະລິດ ແລະຂາຍດ້ວຍຕົນເອງ;
2. ແນວພັນພືດ, ແນວພັນສັດ, ຢາປາບສັດຕູພືດ, ຢາປົວພະຍາດສັດ, ຝຸ່ນຊີວະພາບ ແລະຝຸ່ນວິທະຍາສາດ;
3. ການກ້າເບ້ຍໄມ້, ປູກຕົ້ນໄມ້ເປັນປ່າ, ປູກຕົ້ນໄມ້ອຸດສາຫະກຳ, ປູກຕົ້ນໄມ້ໃຫ້ໝາກ ແລະຕົ້ນໄມ້ເປັນຢາ;
4. ການນຳເຂົ້າວັດຖຸ, ອຸປະກອນ ແລະເຄມີ ທີ່ພາຍໃນປະເທດບໍ່ສາມາດຜະລິດໄດ້ ເພື່ອຮັບໃຊ້ການຄົ້ນຄວ້າ ແລະການວິໄຈວິທະຍາສາດ ຂອງອົງການບໍລິຫານວິຊາການ;
5. ການນຳເຂົ້າຄຳເປັນແທ່ງເພື່ອຄ້ຳປະກັນການພິມຈຳໜ່າຍທະນະບັດ ແລະການນຳເຂົ້າທະນະບັດເປັນເຈ້ຍ ຫລື ເປັນໂລຫະ;
6. ການນຳເຂົ້າ ຫລື ກິດຈະການກ່ຽວກັບສະແຕມອາກອນ ຫລື ສະແຕມໄປສະນີ ທີ່ນຳໃຊ້ທາງລັດຖະການ;
7. ການນຳເຂົ້າເຮືອບິນ ແລະອຸປະກອນຮັບໃຊ້ການຂົນສົ່ງທາງອາກາດ. ສິນຄ້າ, ເຄື່ອງຂອງ, ນ້ຳມັນເຊື້ອໄຟ ແລະນ້ຳມັນອື່ນໆ ເພື່ອຮັບໃຊ້ການບໍລິການຂົນສົ່ງສາກົນທາງອາກາດ;
8. ການນຳເຂົ້າສິນຄ້າ, ເຄື່ອງຂອງ ເພື່ອຈຳໜ່າຍໃຫ້ແກ່ນັກການທູດ, ສະຖານທູດ ແລະອົງການຈັດຕັ້ງສາກົນຢູ່ ສປປ ລາວ ຕາມການອະນຸຍາດຂອງກະຊວງການຕ່າງປະເທດ;
9. ເຄື່ອງຂອງສ່ວນຕົວຂອງນັກການທູດລາວ, ລັດຖະກອນ, ນັກສຶກສາ ແລະນັກຮຽນ ທີ່ນຳເຂົ້າມາ ພາຍຫລັງສິ້ນສຸດການເຄື່ອນໄຫວວຽກງານທາງລັດຖະການຢູ່ຕ່າງປະເທດ, ການຝຶກອົບຮົມ ຫລື ການສຶກສາ ແຕ່ສາມເດືອນຂຶ້ນໄປ ແລະເປັນວັດຖຸ, ເຄື່ອງຂອງ ທີ່ບໍ່ມີລັກສະນະການຄ້າ. ສຳລັບລົດ ແລະຍານພາຫະນະອື່ນ ແມ່ນບໍ່ຍົກເວັ້ນ;
10. ການຜະລິດ ແລະການຂາຍ ປື້ມຕຳລາຮຽນ, ປື້ມຕຳລາສອນ, ໜັງສືພິມ, ວາລະສານການເມືອງທີ່ໄດ້ຮັບອະນຸຍາດ, ລາຍການໂທລະພາບ, ວິທະຍຸກະຈາຍສຽງ ຊຶ່ງເຜີຍແຜ່ແນວທາງນະໂຍບາຍ ຮັບໃຊ້ໜ້າທີ່ການເມືອງ ທີ່ບໍ່ມີລັກສະນະທຸລະກິດ;
11. ກິດຈະການກ່ຽວກັບການສຶກສາ ເຊັ່ນ: ໂຮງລ້ຽງເດັກ, ໂຮງຮຽນອະນຸບານ, ປະຖົມ, ມັດທະຍົມ, ວິທະຍາໄລ, ມະຫາວິທະຍາໄລ, ໂຮງຮຽນວິຊາຊີບ ແລະສູນຝຶກອົບຮົມວິຊາຊີບ;
12. ກິດຈະການບໍລິການ ທະນາຄານ, ສະຖາບັນການເງິນ, ການປະກັນສຸຂະພາບ, ການປະກັນຊີວິດ, ການປະກັນສັດລ້ຽງ ແລະການປະກັນຕົ້ນໄມ້ປູກ;
13. ການບໍລິການປິ່ນປົວ : ການກວດພະຍາດ, ການປິ່ນປົວ, ການວິໄຈພະຍາດ, ຢາພື້ນເມືອງ, ອະໄວຍະວະປ່ຽນຖ່າຍ ແລະ ອຸປະກອນຮັບໃຊ້ຄົນເຈັບ ແລະ ຄົນພິການ.

14. ລິດວິຊາສະເພາະ: ລິດດັບເພີງ, ລິດພະຍາບານ, ລິດສ້ອມແປງ, ລິດຖ່າຍທອດໂທລະພາບ-ວິດທະຍຸ ແລະອື່ນໆ ທີ່ຮັບໃຊ້ວຽກງານບໍລິຫານລັດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
15. ສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ສະໜອງໃຫ້ແກ່ໂຄງການຊ່ວຍເຫລືອລ້າ ຊຶ່ງໄດ້ກຳນົດໄວ້ໃນສັນຍາ, ສົນທິສັນຍາ, ຂໍ້ຜູກພັນທີ່ລັດຖະບານເຊັນກັບຕ່າງປະເທດ.

## ໝວດທີ 2
## ລະບົບ ແລະ ເງື່ອນໄຂໃນການປະຕິບັດ ອາກອນມູນຄ່າເພີ່ມ

### ມາດຕາ 11. ອົງປະກອບຂອງລະບົບອາກອນມູນຄ່າເພີ່ມ

ລະບົບອາກອນມູນຄ່າເພີ່ມ ແມ່ນລະບົບໜຶ່ງຢູ່ໃນລະບົບລວມສ່ວຍສາອາກອນ ຊຶ່ງປ່ຽນແທນສະເພາະອາກອນຕົວເລກທຸລະກິດຕາມລະບຽບການ.

ລະບົບອາກອນມູນຄ່າເພີ່ມປະກອບດ້ວຍ ຫລັກການ, ລະບຽບການ ກ່ຽວກັບການຂຶ້ນທະບຽນ, ການຄິດໄລ່, ການຫັກ-ການສົ່ງຄືນ, ການແຈ້ງເສຍ ແລະ ການຊຳລະອາກອນມູນຄ່າເພີ່ມ.

### ມາດຕາ 12 . ເງື່ອນໄຂຂອງການເຂົ້າໃນລະບົບອາກອນມູນຄ່າເພີ່ມ

ການເຂົ້າໃນລະບົບອາກອນມູນຄ່າເພີ່ມ ປະກອບດ້ວຍເງື່ອນໄຂ ດັ່ງນີ້ :

- ລາຍຮັບທຸລະກິດປະຈຳປີຂອງຜູ້ດຳເນີນທຸລະກິດ;
- ມາດຕະຖານການຖືບັນຊີ ແລະ ການນຳໃຊ້ໃບເກັບເງິນ.

### ມາດຕາ 13. ລາຍຮັບທຸລະກິດປະຈຳປີຂອງຜູ້ດຳເນີນທຸລະກິດ

ຜູ້ດຳເນີນທຸລະກິດ ດັ່ງທີ່ໄດ້ກຳນົດໄວ້ໃນຂໍ້ 1 ມາດຕາ 9 ຂອງກົດໝາຍສະບັບນີ້ ທີ່ມີລາຍຮັບທຸລະກິດປະຈຳປີ ແຕ່ 400.000.000 ກີບ ຂຶ້ນໄປ ຕ້ອງໄດ້ຂຶ້ນທະບຽນເຂົ້າໃນລະບົບອາກອນມູນຄ່າເພີ່ມ ນຳລັດຖະການສ່ວຍສາອາກອນ ແລະເປັນເປົ້າໝາຍຜູ້ທີ່ຕ້ອງມອບອາກອນມູນຄ່າເພີ່ມ ນັບແຕ່ມື້ທີ່ໄດ້ເຂົ້າໃນລະບົບອາກອນມູນຄ່າເພີ່ມເປັນຕົ້ນໄປ.

ໃນກໍລະນີທີ່ລາຄາສິນຄ້າ, ເຄື່ອງຂອງ ແລະ ການບໍລິການ ມີການເໜັງຕີງແຕ່ 20% ຂຶ້ນໄປ ຫລື ຖ້າມີຄວາມຈຳເປັນ ລັດຖະບານຈະເປັນຜູ້ດັດປັບລະດັບລາຍຮັບທຸລະກິດປະຈຳປີ ທີ່ໄດ້ກຳນົດໄວ້ໃນຂ້າງເທິງນີ້ ແລະໃນມາດຕາ 15 ຂອງກົດໝາຍສະບັບນີ້ ເພື່ອເຂົ້າໃນລະບົບອາກອນມູນຄ່າເພີ່ມ ໃຫ້ສອດຄ່ອງກັບສະພາບຕົວຈິງ ແລະລາຍງານຕໍ່ກອງປະຊຸມສະພາແຫ່ງຊາດໃນຄັ້ງຖັດໄປເພື່ອຮັບຮອງເອົາ.

**ມາດຕາ 14. ມາດຕະຖານການຖືບັນຊີ ແລະ ການນຳໃຊ້ໃບເກັບເງິນ**

ຜູ້ດຳເນີນທຸລະກິດ ທີ່ເຂົ້າຢູ່ໃນລະບົບອາກອນມູນຄ່າເພີ່ມ ຕ້ອງຖືບັນຊີແບບຂະຫຍາຍຕົວ ຫລືແບບທຳມະດາ ຕາມລະບຽບກົດໝາຍການບັນຊີວິສາຫະກິດ ທີ່ໄດ້ກຳນົດໄວ້ ແລະໄດ້ຮັບການຢັ້ງຢືນທາງດ້ານມາດຕະຖານ ຈາກອົງການທີ່ກ່ຽວຂ້ອງຂອງລັດ ຫລື ທຸລະກິດທີ່ປຶກສາການບັນຊີ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມລະບຽບກົດໝາຍ ພ້ອມກັນນັ້ນ ຕ້ອງນຳໃຊ້ໃບເກັບເງິນທີ່ລັດປະກາດໃຊ້ໃຫ້ຖືກຕ້ອງຕາມລະບຽບການ.

**ມາດຕາ 15. ຄວາມສະໝັກໃຈເຂົ້າໃນລະບົບອາກອນມູນຄ່າເພີ່ມ**

ຜູ້ດຳເນີນທຸລະກິດ ຊຶ່ງມີລາຍຮັບທຸລະກິດປະຈຳປີ ຕ່ຳກວ່າ 400.000.000 ກີບ ທີ່ປະຕິບັດການຖືບັນຊີ, ນຳໃຊ້ໃບເກັບເງິນ ແລະໃບຢັ້ງຢືນອື່ນໆ ຢ່າງຖືກຕ້ອງນັ້ນ ສາມາດຍື່ນຄຳຮ້ອງເພື່ອຂໍຂຶ້ນທະບຽນເຂົ້າໃນລະບົບອາກອນມູນຄ່າເພີ່ມ ດ້ວຍຄວາມສະໝັກໃຈນຳລັດຖະການສ່ວຍສາອາກອນ ແລະເປັນເປົ້າໝາຍ ຜູ້ທີ່ຕ້ອງມອບອາກອນມູນຄ່າເພີ່ມໃນເດືອນຖັດໄປ ນັບແຕ່ມື້ທີ່ໄດ້ຮັບອະນຸມັດເຂົ້າໃນລະບົບອາກອນມູນຄ່າເພີ່ມເປັນຕົ້ນໄປ.

## ໝວດທີ 3
## ການຄິດໄລ່ອາກອນມູນຄ່າເພີ່ມ

**ມາດຕາ 16. ວິທີການຄິດໄລ່ອາກອນມູນຄ່າເພີ່ມ**

ວິທີການຄິດໄລ່ອາກອນມູນຄ່າເພີ່ມ ແມ່ນເອົາມູນຄ່າຂອງສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ຖືກເສຍອາກອນມູນຄ່າເພີ່ມ ຄູນກັບອັດຕາອາກອນມູນຄ່າເພີ່ມ.

**ມາດຕາ 17. ພື້ນຖານການຄິດໄລ່ອາກອນມູນຄ່າເພີ່ມ**

ພື້ນຖານການຄິດໄລ່ອາກອນມູນຄ່າເພີ່ມ ກໍຄືມູນຄ່າຂອງສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ຖືກເສຍອາກອນມູນຄ່າເພີ່ມ ໃນແຕ່ລະກໍລະນີ ແມ່ນຄິດໄລ່ດັ່ງນີ້ :

1. ສຳລັບສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າຈາກຕ່າງປະເທດ ແມ່ນມູນຄ່າແຈ້ງເສຍພາສີຂາເຂົ້າບວກຄ່າພາສີຂາເຂົ້າ, ອາກອນຊົມໃຊ້ ( ຖ້າມີ ) ແລະຄ່າບໍລິການ ທີ່ຕິດພັນກັບການນຳເຂົ້າສິນຄ້າ, ເຄື່ອງຂອງນັ້ນ;
2. ສຳລັບສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ຖືກເກັບອາກອນຊົມໃຊ້ ຢູ່ຂອດການຜະລິດພາຍໃນປະເທດ ແລະຈາກການນຳເຂົ້າທີ່ຂາຍຢູ່ພາຍໃນປະເທດ ແມ່ນມູນຄ່າຂາຍທີ່ມີອາກອນຊົມໃຊ້ຢູ່ນຳ ( ຖ້າມີ ) ແຕ່ບໍ່ທັນມີອາກອນມູນຄ່າເພີ່ມ;
3. ສຳລັບສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ນຳໃຊ້ເພື່ອການແລກປ່ຽນ, ຊົມໃຊ້ຢູ່ພາຍໃນລວມທັງການຊົມໃຊ້ດ້ວຍຕົນເອງ, ບຸກຄົນອື່ນ ແລະຄົນງານຂອງຕົນ, ການມອບໃຫ້ລ້າ ແມ່ນໃຫ້ເອົາລາຄາຂາຍໃນທ້ອງຕະຫລາດຂອງສິນຄ້າ, ເຄື່ອງຂອງ ແລະການບໍລິການດັ່ງກ່າວ ທີ່ບໍ່ທັນມີອາກອນມູນຄ່າເພີ່ມ ຫລື ລາຄາທຽບເທົ່າ ຢູ່ບ່ອນທີ່ມີການເຄື່ອນໄຫວນັ້ນ;

4. ສຳລັບການໃຫ້ເຊົ່າຊັບສິນບັດຂອງຜູ້ດຳເນີນທຸລະກິດ ແມ່ນຄ່າເຊົ່າທີ່ໄດ້ຮັບໃນແຕ່ລະໄລຍະ ຕາມທີ່ໄດ້ບົ່ງໄວ້ໃນສັນຍາ;
5. ສຳລັບການບໍລິການມອບເໝົາແຮງງານ ແມ່ນຄ່າບໍລິການ ລວມອາກອນມູນຄ່າເພີ່ມ ທີ່ໄດ້ຮັບ ຕາມສັນຍາ, ສຳລັບທຸລະກິດການຈັດຫາງານ ແມ່ນຄ່າບໍລິການທີ່ໄດ້ຮັບ ທີ່ບໍ່ລວມອາກອນມູນ ຄ່າເພີ່ມ;
6. ສຳລັບສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ຂາຍດ້ວຍວິທີການຜ່ອນຊຳລະ ແມ່ນມູນຄ່າ ຂາຍທັງໝົດ ທີ່ບໍ່ລວມອາກອນມູນຄ່າເພີ່ມ ຊຶ່ງກຳນົດໃຫ້ຊຳລະໃນເທື່ອດຽວ ແລະບໍ່ໃຫ້ລວມ ດອກເບ້ຍເຂົ້ານຳ ;
7. ສຳລັບສິນຄ້າ, ເຄື່ອງຂອງ ແລະ ການບໍລິການອື່ນໆ ທີ່ມີລັກສະນະສະເພາະ ເຊັ່ນ : ການບໍລິການທ່ອງທ່ຽວ, ກິດຈະການໂທລະຄົມມະນາຄົມ, ອິນເຕີແນັດ, ກິດຈະການຫວຍ, ກິດຈະການ ຕົວແທນ, ນາຍໜ້າ ແລະກິດຈະການອື່ນໆ ທີ່ມີຄວາມຫຍຸ້ງຍາກໃນການກຳນົດພື້ນຖານການ ຄິດໄລ່ອາກອນມູນຄ່າເພີ່ມນັ້ນ ແມ່ນໃຫ້ລັດຖະບານເປັນຜູ້ກຳນົດລະບຽບການລະອຽດ.

ພື້ນຖານການຄິດໄລ່ອາກອນມູນຄ່າເພີ່ມສຳລັບສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ໄດ້ກຳນົດ ໄວ້ໃນມາດຕານີ້ ຖ້າມີລາຍຮັບເພີ່ມ ກໍໃຫ້ລວມເຂົ້າໃນການຄິດໄລ່ອາກອນມູນຄ່າເພີ່ມຂອງຜູ້ດຳເນີນທຸລະກິດ.

ໃນກໍລະນີທີ່ຜູ້ດຳເນີນທຸລະກິດ ມີລາຍຮັບທຸລະກິດເປັນສະກຸນເງິນຕາຕ່າງປະເທດ ຕ້ອງຄິດໄລ່ເປັນ ເງິນກີບ ຕາມອັດຕາແລກປ່ຽນຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ ເວລາທີ່ມີການຊື້-ຂາຍ ແລະ ບໍລິການນັ້ນໄດ້ເກີດຂຶ້ນ ເພື່ອກຳນົດພື້ນຖານການຄິດໄລ່ອາກອນມູນຄ່າເພີ່ມ.

### ມາດຕາ 18. ການດັດແກ້ພື້ນຖານການຄິດໄລ່ອາກອນມູນຄ່າເພີ່ມ

ພື້ນຖານການຄິດໄລ່ອາກອນມູນຄ່າເພີ່ມ ຈະຖືກດັດແກ້ໃນກໍລະນີ ດັ່ງນີ້ :

1. ເມື່ອລູກຄ້າສົ່ງສິນຄ້າ, ເຄື່ອງຂອງ ຫລື ຄ່າບໍລິການ ຄືນເປັນບາງສ່ວນ ຫລື ທັງໝົດ;
2. ເມື່ອມີການຍົກເລີກການຂາຍ ຫລື ການບໍລິການຕາມພາຍຫລັງ;
3. ເມື່ອມີການຫລຸດລາຄາສິນຄ້າ, ເຄື່ອງຂອງ ຫລື ການບໍລິການ.

ການດັດແກ້ພື້ນຖານການຄິດໄລ່ອາກອນມູນຄ່າເພີ່ມ ໃນກໍລະນີທີ່ໄດ້ກ່າວໄວ້ຂ້າງເທິງນີ້ ຈະຖືກປະ ຕິບັດ ກໍຕໍ່ເມື່ອຜູ້ຂາຍໄດ້ອອກໃບເກັບເງິນທີ່ມີອາກອນມູນຄ່າເພີ່ມ ແລະໄດ້ແຈ້ງຈຳນວນເງິນອາກອນມູນຄ່າ ເພີ່ມ ຢູ່ໃນໃບແຈ້ງເສຍອາກອນມູນຄ່າເພີ່ມແລ້ວ.

### ມາດຕາ 19. ອັດຕາອາກອນມູນຄ່າເພີ່ມ

ອັດຕາອາກອນມູນຄ່າເພີ່ມ ປະກອບມີດັ່ງນີ້ :

1. ອັດຕາ 10% ສຳລັບສິນຄ້າ, ເຄື່ອງຂອງ ແລະ ການບໍລິການ ທີ່ນຳເຂົ້າ, ຜະລິດ ແລະຊົມໃຊ້ ຢູ່ພາຍໃນ ທີ່ຖືກເສຍອາກອນມູນຄ່າເພີ່ມ;
2. ອັດຕາສູນ ( 0% ) ສຳລັບສິນຄ້າ, ເຄື່ອງຂອງ ແລະ ການບໍລິການ ທີ່ສົ່ງອອກຕ່າງປະເທດ.

**ມາດຕາ 20. ການຄິດໄລ່ອາກອນມູນຄ່າເພີ່ມທີ່ຕ້ອງມອບ**

ອາກອນມູນຄ່າເພີ່ມທີ່ຕ້ອງມອບ ແມ່ນເທົ່າກັບອາກອນມູນຄ່າເພີ່ມທີ່ເກັບໄດ້ ໃນເວລາຂາຍ ( ໃນເບື້ອງສົ້ນອອກ ) ລົບອາກອນມູນຄ່າເພີ່ມທີ່ໄດ້ຈ່າຍແລ້ວໃນເວລາຊື້ (ໃນເບື້ອງສົ້ນເຂົ້າ) ທີ່ເປັນສິນເຊື່ອ ຊຶ່ງໄດ້ຮັບອະນຸຍາດໃຫ້ຫັກອອກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້.

ອາກອນມູນຄ່າເພີ່ມທີ່ເກັບໄດ້ໃນເວລາຂາຍ (ໃນເບື້ອງສົ້ນອອກ) ແມ່ນເທົ່າກັບລາຄາສິນຄ້າ, ເຄື່ອງຂອງ ຫລື ການບໍລິການ ທີ່ຂາຍອອກຕົວຈິງ ຄູນກັບອັດຕາອາກອນມູນຄ່າເພີ່ມ ຊຶ່ງຂຽນຢູ່ໃນໃບເກັບເງິນໃນເວລາຂາຍສິນຄ້າ, ເຄື່ອງຂອງ ແລະການບໍລິການ.

ອາກອນມູນຄ່າເພີ່ມໃນເວລາຊື້ (ໃນເບື້ອງສົ້ນເຂົ້າ) ທີ່ເປັນສິນເຊື່ອຊຶ່ງຈະອະນຸຍາດ ໃຫ້ຫັກອອກນັ້ນແມ່ນເທົ່າກັບລວມຍອດອາກອນມູນຄ່າເພີ່ມທີ່ໄດ້ຈ່າຍແລ້ວ ຕາມໃບເກັບເງິນທີ່ບົ່ງອາກອນມູນຄ່າເພີ່ມ ໃນເວລາຊື້ສິນຄ້າ, ເຄື່ອງຂອງ ແລະການບໍລິການ ຫລື ຕາມເອກະສານຢັ້ງຢືນການມອບອາກອນມູນຄ່າເພີ່ມ ໃນເວລານຳເຂົ້າສິນຄ້າ, ເຄື່ອງຂອງ ແລະການບໍລິການ ຈາກຕ່າງປະເທດ.

ສຳລັບກໍລະນີການຊື້-ຂາຍ ທີ່ນຳໃຊ້ໃບເກັບເງິນປະເພດອື່ນໆ (ປີ້, ບັດ...) ຊຶ່ງມີລາຄາຄິດຕົວໃສ່ແລ້ວນັ້ນ ໂດຍບໍ່ໄດ້ແຍກໃຫ້ເຫັນອາກອນມູນຄ່າເພີ່ມຕ່າງຫາກ (ອາກອນມູນເພີ່ມ ແມ່ນລວມຢູ່ໃນລາຄາແລ້ວ), ອາກອນມູນຄ່າເພີ່ມໃນເບື້ອງສົ້ນອອກ ຫລື ໃນເບື້ອງສົ້ນເຂົ້າ ແມ່ນໃຫ້ຄິດໄລ່ດ້ວຍການຊອກຫາລາຄາ ທີ່ບໍ່ລວມ ອາກອນມູນຄ່າເພີ່ມຄືນໃໝ່ ແລ້ວຄູນກັບອັດຕາອາກອນ.

**ມາດຕາ 21. ເວລາຄິດໄລ່ການເກັບອາກອນມູນຄ່າເພີ່ມ**

ເວລາຄິດໄລ່ການເກັບອາກອນມູນຄ່າເພີ່ມ ໄດ້ກຳນົດລະອຽດຕາມແຕ່ລະກໍລະນີ ດັ່ງນີ້ :

1. ສຳລັບສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າຈາກຕ່າງປະເທດ ແມ່ນເວລາດຽວກັນກັບການຍື່ນໃບແຈ້ງພາສີຂາເຂົ້າ;
2. ສຳລັບການຂາຍສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າຈາກຕ່າງປະເທດ ຫລື ທີ່ຜະລິດພາຍໃນປະເທດ ແລະການໃຫ້ບໍລິການ ໂດຍບໍ່ຈຳແນກວ່າຜູ້ຊື້ໄດ້ຊຳລະ ຫລື ບໍ່ທັນໄດ້ຊຳລະເງິນ ແມ່ນປະຕິບັດຕາມແຕ່ລະກໍລະນີ ດັ່ງນີ້ :
    - ກ. ໃນກໍລະນີທີ່ຜູ້ຂາຍໄດ້ອອກໃບເກັບເງິນ ແລະໄດ້ໂອນມອບກຳມະສິດສິນຄ້າ, ເຄື່ອງຂອງ ແລ້ວ ເວລາຄິດໄລ່ການເກັບອາກອນມູນຄ່າເພີ່ມ ແມ່ນເວລາອອກໃບເກັບເງິນ ແລະໄດ້ໂອນມອບກຳມະສິດນັ້ນ;
    - ຂ. ໃນກໍລະນີທີ່ຜູ້ຂາຍໄດ້ສົ່ງມອບສິນຄ້າ, ເຄື່ອງຂອງ, ສະໜອງການບໍລິການໃຫ້ແກ່ຜູ້ຊື້ແລ້ວ ແຕ່ບໍ່ທັນໄດ້ອອກໃບເກັບເງິນນັ້ນ ເວລາຄິດໄລ່ການເກັບອາກອນມູນຄ່າເພີ່ມ ແມ່ນເວລາສົ່ງມອບສິນຄ້າ, ເຄື່ອງຂອງ ຫລື ສະໜອງການບໍລິການ ຫລື ເວລາທີ່ມີການຂົນສົ່ງສິນຄ້າ, ເຄື່ອງຂອງ;
    - ຄ. ໃນກໍລະນີທີ່ຜູ້ຊື້ໄດ້ຈ່າຍເງິນລ່ວງໜ້າໃຫ້ແກ່ຜູ້ຂາຍຕາມສັນຍາຊື້-ຂາຍ ແຕ່ຜູ້ຂາຍບໍ່ທັນໄດ້ອອກໃບເກັບເງິນນັ້ນ ເວລາຄິດໄລ່ການເກັບອາກອນມູນຄ່າເພີ່ມ ແມ່ນເວລາທີ່ຜູ້ຂາຍ ໄດ້ຮັບເງິນຕົວຈິງ;

໑. ໃນກໍລະນີທີ່ມີການຊຳລະເງິນເປັນຫລາຍເທື່ອ ສຳລັບລາຍການໜຶ່ງນັ້ນ ເວລາຄິດໄລ່ການເກັບອາກອນມູນຄາເພີ່ມ ແມ່ນເວລາທີ່ມີການສົ່ງມອບສິນຄ້າ, ເຄື່ອງຂອງ ແລະການບໍລິການຕົວຈິງ ໃຫ້ແກ່ຜູ້ຊື້ ຕາມມູນຄ່າທັງໝົດທີ່ຕ້ອງຊຳລະ.

3. ສຳລັບສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ມີການຊົມໃຊ້ດ້ວຍຕົນເອງ, ບຸກຄົນອື່ນ ແລະຄົນງານຂອງຕົນນັ້ນ ແມ່ນເວລາທີ່ມີການຊົມໃຊ້ ຫລື ການສະໜອງໄດ້ເກີດຂຶ້ນຕົວຈິງ.

## ໝວດທີ 4
## ການຫັກ ແລະ ການສົ່ງຄືນອາກອນມູນຄ່າເພີ່ມ

### ມາດຕາ 22. ການຫັກອາກອນມູນຄ່າເພີ່ມ

ອາກອນມູນຄ່າເພີ່ມ ໃນເບື້ອງສົ້ນເຂົ້າທີ່ຖືກອະນຸຍາດໃຫ້ຫັກອອກໄດ້ ແມ່ນອາກອນມູນຄ່າເພີ່ມ ຊຶ່ງໄດ້ຈ່າຍແລ້ວຕາມໃບເກັບເງິນໃນເວລາຊື້ສິນຄ້າ, ເຄື່ອງຂອງ ແລະການບໍລິການ ຫລື ໃນເອກະສານຢັ້ງຢືນການເສຍອາກອນມູນຄ່າເພີ່ມຢູ່ບ່ອນນຳເຂົ້າ ຂອງຜູ້ດຳເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ເປັນແຕ່ລະກໍລະນີດັ່ງນີ້ :

1. ອາກອນມູນຄ່າເພີ່ມໃນເບື້ອງສົ້ນເຂົ້າຂອງສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ນຳໃຊ້ເຂົ້າໃນການຜະລິດ, ທຸລະກິດ ແລະການບໍລິການ ຊຶ່ງຖືກເສຍອາກອນມູນຄ່າເພີ່ມ ແມ່ນອະນຸຍາດໃຫ້ຫັກອອກທັງໝົດ;
2. ອາກອນມູນຄ່າເພີ່ມໃນເບື້ອງສົ້ນເຂົ້າ ຂອງສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ໄດ້ນຳໃຊ້ລວມເຂົ້າໃນການຜະລິດ ທຸລະກິດ ແລະການບໍລິການ ຊຶ່ງຖືກເສຍອາກອນມູນຄ່າເພີ່ມ ແລະຖືກຍົກເວັ້ນອາກອນມູນຄ່າເພີ່ມນັ້ນ ແມ່ນອະນຸຍາດໃຫ້ຫັກອອກສະເພາະແຕ່ພູດສ່ວນຂອງສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ໄດ້ນຳໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດ ທີ່ຖືກເສຍອາກອນມູນຄ່າເພີ່ມເທົ່ານັ້ນ;
3. ສະເພາະອາກອນມູນຄ່າເພີ່ມໃນເບື້ອງສົ້ນເຂົ້າຂອງຊັບສົມບັດຄົງທີ່ ທີ່ໄດ້ນຳໃຊ້ລວມເຂົ້າໃນການຜະລິດ ທຸລະກິດ ສິນຄ້າ, ເຄື່ອງຂອງ ແລະການບໍລິການ ຊຶ່ງຖືກເສຍອາກອນມູນຄ່າເພີ່ມ ແລະ ຖືກຍົກເວັ້ນອາກອນມູນຄ່າເພີ່ມ ແມ່ນສາມາດຫັກອອກໄດ້ທັງໝົດ;
4. ອາກອນມູນຄ່າເພີ່ມໃນເບື້ອງສົ້ນເຂົ້າຂອງສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ສົ່ງອອກລວມທັງສິນຄ້າ, ເຄື່ອງຂອງ ແລະການບໍລິການທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ ທີ່ສົ່ງອອກແມ່ນສາມາດຫັກອອກໄດ້ ແຕ່ຕ້ອງປະຕິບັດຕາມເງື່ອນໄຂ ແລະເອກະສານຢັ້ງຢືນ ດັ່ງນີ້ :
   ກ. ສິນຄ້າ, ເຄື່ອງຂອງ, ການບໍລິການທີ່ຖືກສົ່ງອອກຢ່າງແທ້ຈິງ ຊຶ່ງຕ້ອງມີການຢັ້ງຢືນຂອງລັດຖະການພາສີ;
   ຂ. ມີສັນຍາຊື້-ຂາຍ;

ຄ. ປະຕິບັດການຊໍາລະຜ່ານທະນາຄານ ແລະການຊໍາລະ ດ້ວຍຮູບການອື່ນ ເຊັ່ນ: ການແລກປ່ຽນສິນຄ້າ, ເຄື່ອງຂອງ, ການບໍລິການ ແລະການຊໍາລະ ແບບພິເສດອື່ນໆ ຕາມທີ່ລະບຽບກົດໝາຍໄດ້ກໍານົດໄວ້.

ການຫັກອາກອນມູນຄ່າເພີ່ມໃນເບື້ອງສົ້ນເຂົ້າ ສໍາລັບສິນຄ້າ, ເຄື່ອງຂອງ ແລະການບໍລິການທີ່ສົ່ງອອກຕ່າງປະເທດ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

5. ຜູ້ດໍາເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ ທີ່ອາກອນມູນຄ່າເພີ່ມໃນເບື້ອງສົ້ນເຂົ້າ ຊຶ່ງໄດ້ຮັບອະນຸຍາດໃຫ້ຫັກອອກ ຫາກສູງກວ່າອາກອນມູນຄ່າເພີ່ມໃນເບື້ອງສົ້ນອອກ ທີ່ໄດ້ແຈ້ງມອບຢູ່ພາຍໃນເດືອນນັ້ນ ສ່ວນຜິດດ່ຽງສາມາດຍົກໄປຫັກອອກຈາກອາກອນມູນຄ່າເພີ່ມ ໃນເດືອນຖັດໄປ ແຕ່ບໍ່ໃຫ້ກາຍຫົກເດືອນ ເວັ້ນເສຍແຕ່ກໍລະນີທີ່ມີການສົ່ງຄືນອາກອນມູນຄ່າເພີ່ມຕາມທີ່ໄດ້ກໍານົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້.

ອາກອນມູນຄ່າເພີ່ມໃນເບື້ອງສົ້ນເຂົ້າທີ່ອະນຸຍາດໃຫ້ຫັກ ແມ່ນຕ້ອງສະເໜີຂໍຫັກໃນເວລາຄິດໄລ່ອາກອນມູນຄ່າເພີ່ມ ໃສ່ໃນໃບແຈ້ງເສຍຢູ່ພາຍໃນເດືອນຢ່າງເປັນລາຍລັກອັກສອນ ນັບແຕ່ເດືອນທີ່ມີອາກອນມູນຄ່າເພີ່ມໃນເບື້ອງສົ້ນເຂົ້າ ຢູ່ນໍາລັດຖະການສ່ວຍສາອາກອນ ແຕ່ບໍ່ໃຫ້ກາຍຫົກເດືອນ.

**ມາດຕາ 23. ອາກອນມູນຄ່າເພີ່ມໃນເບື້ອງສົ້ນເຂົ້າ ທີ່ບໍ່ອະນຸຍາດໃຫ້ຫັກ**

ອາກອນມູນຄ່າເພີ່ມໃນເບື້ອງສົ້ນເຂົ້າ ທີ່ບໍ່ອະນຸຍາດໃຫ້ຫັກອອກຈາກອາກອນມູນຄ່າເພີ່ມ ໃນເບື້ອງສົ້ນອອກ ມີກໍລະນີດັ່ງນີ້ :

1. ສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້;
2. ສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ມີເອກະສານຢັ້ງຢືນການຈ່າຍອາກອນມູນຄ່າເພີ່ມໃນເບື້ອງສົ້ນເຂົ້າ ໃນເວລາຊື້ ຫລື ນໍາເຂົ້າ ບໍ່ຖືກຕ້ອງ ແລະບໍ່ຄົບຖ້ວນ;
3. ສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ບໍ່ນໍາໃຊ້ເຂົ້າໃນກິດຈະການຕົ້ນຕໍຂອງຜູ້ດໍາເນີນທຸລະກິດ ຊຶ່ງຖືກເສຍອາກອນມູນຄ່າເພີ່ມ ເຊັ່ນ: ອາຫານ, ການພັກເຊົາ, ການທ່ອງທ່ຽວ, ການບັນເທີງ, ງານລ້ຽງຕ້ອນຮັບ, ການສິງເຄາະ ຫລື ການບໍລິຈາກເປັນວັດຖຸສິ່ງຂອງ, ການສະໜອງສິນຄ້າ, ເຄື່ອງຂອງ ແລະການບໍລິການ ໂດຍບໍ່ມີຄ່າຕອບແທນ ໃຫ້ແກ່ຕົນເອງ ຫລື ຄົນງານ ທີ່ຢູ່ໃນການຈັດຕັ້ງທຸລະກິດຂອງຕົນ;
4. ນໍ້າມັນເຊື້ອໄຟ ແລະນໍ້າມັນລໍ່ລື່ນ ຊຶ່ງນໍາໃຊ້ລວມເຂົ້າໃນ ການດໍາເນີນທຸລະກິດ, ຜະລິດສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ຖືກເສຍອາກອນມູນຄ່າເພີ່ມ ແລະຖືກຍົກເວັ້ນອາກອນມູນຄ່າເພີ່ມ;
5. ຄ່າໂທລະສັບ, ນໍ້າປະປາ, ໄຟຟ້າ ທີ່ບໍ່ໄດ້ນໍາໃຊ້ເຂົ້າໃນກິດຈະການຕົ້ນຕໍຂອງຜູ້ດໍາເນີນທຸລະກິດ;
6. ຄ່າເຊົ່າວັດຖຸ, ອຸປະກອນ, ພາຫະນະ ຫລື ຊັບສິນອື່ນໆ;
7. ການຂາຍພາຫະນະ ລວມທັງສ່ວນປະກອບ ແລະເຄື່ອງອາໄຫລ່ຂອງພາຫະນະດັ່ງກ່າວ ທີ່ບໍ່ແມ່ນກິດຈະການຕົ້ນຕໍຂອງທຸລະກິດ.

**ມາດຕາ 24. ການສົ່ງຄືນອາກອນມູນຄ່າເພີ່ມ**

ອາກອນມູນຄ່າເພີ່ມຈະຖືກສົ່ງຄືນ ໃນກໍລະນີ ດັ່ງນີ້ :

1. ອາກອນມູນຄ່າເພີ່ມໃນເບື້ອງສິ້ນເຂົ້າ ຂອງສິນຄ້າ, ເຄື່ອງຂອງ ແລະການບໍລິການ ທີ່ສົ່ງອອກ ລວມທັງສິນຄ້າ, ເຄື່ອງຂອງ ແລະ ການບໍລິການ ທີ່ຖືກຍົກເວັ້ນ ຕາມມາດຕາ 10 ຂອງກົດໝາຍສະບັບນີ້ ທີ່ຖືກສົ່ງອອກ ຕ້ອງຖືກສົ່ງຄືນເປັນແຕ່ລະເດືອນ ຍົກເວັ້ນຜະລິດຕະພັນໄມ້ທຳມະຊາດ ແລະຊັບພະຍາ ກອນບໍ່ແຮ່ ຊຶ່ງລັດຖະບານສະຫງວນສິດ;
2. ອາກອນມູນຄ່າເພີ່ມທີ່ຫັກບໍ່ໝົດ ຫລື ໄດ້ຈ່າຍເກີນຈຳນວນທີ່ຕ້ອງມອບຕົວຈິງ ໃນເວລາມີການຄວບກິດຈະການ, ແຍກກິດຈະການ ຫລື ລົ້ມລະລາຍ ຕາມກົດໝາຍ;
3. ອາກອນມູນຄ່າເພີ່ມທີ່ຕ້ອງສົ່ງຄືນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະສັນຍາສາກົນ;
4. ອາກອນມູນຄ່າເພີ່ມໃນເບື້ອງສິ້ນເຂົ້າ ທີ່ຫັກບໍ່ໝົດຢູ່ພາຍໃນເດືອນຂອງຜູ້ດຳເນີນທຸລະກິດ ຊຶ່ງມີລາຍຮັບທຸລະກິດທັງຢູ່ພາຍໃນ ແລະສົ່ງອອກໄປຕ່າງປະເທດ ສຳລັບໄລຍະການບັນຊີໜຶ່ງຈະໄດ້ຮັບການສົ່ງຄືນສະເພາະໃນພູດທີ່ສົ່ງອອກເທົ່ານັ້ນ.

ຜູ້ດຳເນີນທຸລະກິດ ຕ້ອງຍື່ນຄຳຮ້ອງຢ່າງເປັນລາຍລັກອັກສອນ ເພື່ອຂໍຄືນອາກອນມູນຄ່າເພີ່ມຕໍ່ລັດຖະການສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ.

ຂອບເຂດສິດ, ກຳນົດເວລາ, ເອກະສານ ແລະແຫລ່ງທຶນເພື່ອສ້າງກອງທຶນ ໃນການສົ່ງຄືນອາກອນມູນຄ່າເພີ່ມ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ພາກທີ III
## ທະບຽນອາກອນມູນຄ່າເພີ່ມ

### ໝວດທີ 1
### ຫລັກການລວມກ່ຽວກັບທະບຽນອາກອນມູນຄ່າເພີ່ມ

**ມາດຕາ 25. ຫລັກການລວມ**

ຫລັກການລວມ ກ່ຽວກັບທະບຽນອາກອນມູນຄ່າເພີ່ມ ມີດັ່ງນີ້ :

- ການຂຶ້ນທະບຽນອາກອນມູນຄ່າເພີ່ມ;
- ການຍົກເລີກອາກອນມູນຄ່າເພີ່ມ.

**ມາດຕາ 26. ການຂຶ້ນທະບຽນອາກອນມູນຄ່າເພີ່ມ**

ການຂຶ້ນທະບຽນອາກອນມູນຄ່າເພີ່ມ ແມ່ນການບັນທຶກຂໍ້ມູນທີ່ສຳຄັນຕົ້ນຕໍຂອງຜູ້ມອບອາກອນຢ່າງເປັນລະບົບຕໍ່ເນື່ອງ ເຂົ້າໃນບັນຊີຄຸ້ມຄອງຂອງລັດຖະການສ່ວຍສາອາກອນ.

ການຂໍຂຶ້ນທະບຽນອາກອນມູນຄ່າເພີ່ມ ຕ້ອງດຳເນີນດ້ວຍການຍື່ນຄຳຮ້ອງ ຕາມແບບພິມທີ່ໄດ້ປະກາດໃຊ້ຢູ່ຫ້ອງການຂອງລັດຖະການສ່ວຍສາອາກອນ ບ່ອນທີ່ສຳນັກງານຂອງຕົນຕັ້ງຢູ່.

ພາຍຫລັງໄດ້ຮັບຄຳຮ້ອງຂໍຂຶ້ນທະບຽນອາກອນມູນຄ່າເພີ່ມແລ້ວ ເຈົ້າໜ້າທີ່ສ່ວຍສາອາກອນຕ້ອງພິຈາລະນາ ແລະອອກໃບຢັ້ງຢືນການຂຶ້ນທະບຽນອາກອນມູນຄ່າເພີ່ມ ພ້ອມດ້ວຍເລກປະຈຳຕົວໃຫ້ຜູ້ມອບອາກອນ ພາຍໃນກຳນົດສິບຫ້າວັນລັດຖະການ.

ຜູ້ທີ່ໄດ້ຂຶ້ນທະບຽນອາກອນມູນຄ່າເພີ່ມແລ້ວ ຕ້ອງນຳໃຊ້ເລກປະຈຳຕົວຂອງຕົນ ເພື່ອຢັ້ງຢືນໃນທຸກການພົວພັນທຸລະກິດ ແລະວຽກງານທາງລັດຖະການ ຕາມທີ່ລະບຽບກົດໝາຍໄດ້ກຳນົດໄວ້.

ໃນກໍລະນີທີ່ມີການຄວບກິດຈະການ, ການແຍກກິດຈະການ ຫລື ປ່ຽນແປງກິດຈະການນັ້ນ ຜູ້ດຳເນີນທຸລະກິດ ຕ້ອງແຈ້ງໃຫ້ລັດຖະການສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບຊາບ ພາຍໃນກຳນົດ ສາມສິບວັນລັດຖະການ ນັບແຕ່ວັນທີ່ມີການຄວບ, ການແຍກ ຫລື ປ່ຽນແປງດັ່ງກ່າວເປັນຕົ້ນໄປ.

ຂັ້ນຕອນ ແລະລະບຽບການລະອຽດ ກ່ຽວກັບການຂຶ້ນທະບຽນອາກອນມູນຄ່າເພີ່ມ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 27. ການຂຶ້ນທະບຽນອາກອນມູນຄ່າເພີ່ມສຳລັບຜູ້ດຳເນີນທຸລະກິດ

ຜູ້ດຳເນີນທຸລະກິດມາແລ້ວ ຕາມທີ່ໄດ້ກຳນົດໄວ້ໃນວັກ 1 ມາດຕາ 13 ແລະມາດຕາ 15 ຂອງກົດໝາຍສະບັບນີ້ ຕ້ອງປະກອບຄຳຮ້ອງຂໍຂຶ້ນທະບຽນເຂົ້າໃນລະບົບອາກອນມູນຄ່າເພີ່ມ ນຳລັດຖະການສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ.

ສຳລັບຜູ້ດຳເນີນທຸລະກິດໃໝ່ ຕ້ອງສະເໜີແຜນລາຍຮັບທຸລະກິດປະຈຳປີ ຕາມທີ່ໄດ້ກຳນົດໄວ້ໃນວັກ 1 ມາດຕາ 13 ແລະມາດຕາ 15 ຂອງກົດໝາຍສະບັບນີ້, ຕ້ອງປະກອບຄຳຮ້ອງຂໍຂຶ້ນທະບຽນອາກອນມູນຄ່າເພີ່ມ ນຳລັດຖະການສ່ວຍສາອາກອນ ບ່ອນສະຖານທີ່ດຳເນີນທຸລະກິດຂອງຕົນຕັ້ງຢູ່ ແລະ ຈະຖືກຈັດເຂົ້າໃນລະບົບອາກອນມູນຄ່າເພີ່ມ ພ້ອມດ້ວຍເລກປະຈຳຕົວໃຫ້ຜູ້ມອບອາກອນ ພາຍໃນກຳນົດສາມສິບວັນລັດຖະການ.

ການຂຶ້ນທະບຽນອາກອນມູນຄ່າເພີ່ມທີ່ໄດ້ກຳນົດໄວ້ໃນມາດຕານີ້ ແມ່ນມີຜົນສັກສິດນັບແຕ່ວັນທີ່ໄດ້ຮັບໃບຢັ້ງຢືນການຂຶ້ນທະບຽນອາກອນມູນຄ່າເພີ່ມເປັນຕົ້ນໄປ.

### ມາດຕາ 28. ການຍົກເລີກທະບຽນອາກອນມູນຄ່າເພີ່ມ

ຜູ້ດຳເນີນທຸລະກິດທີ່ຕ້ອງການຢຸດເຊົາການເຄື່ອນໄຫວທຸລະກິດນັ້ນ ຕ້ອງປະກອບຄຳຮ້ອງ ເພື່ອຂໍຍົກເລີກທະບຽນອາກອນມູນຄ່າເພີ່ມ ນຳລັດຖະການສ່ວຍສາອາກອນບ່ອນທີ່ຕົນໄດ້ຂຶ້ນທະບຽນ; ລັດຖະການສ່ວຍສາອາກອນ ຕ້ອງຄົ້ນຄວ້າອອກໃບຢັ້ງຢືນໃຫ້ ພາຍໃນກຳນົດສາມສິບວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງເປັນຕົ້ນໄປ. ຜູ້ດຳເນີນທຸລະກິດຕ້ອງສືບຕໍ່ເສຍອາກອນມູນຄ່າເພີ່ມ ຈົນກວ່າຈະໄດ້ຮັບໃບຢັ້ງຢືນການຍົກເລີກ.

## ໝວດທີ 2
## ຫລັກການສະເພາະກ່ຽວກັບທະບຽນອາກອນມູນຄ່າເພີ່ມ

**ມາດຕາ 29 . ຜູ້ທີ່ບໍ່ມີພູມລຳເນົາ ແລະ ບໍ່ໄດ້ຂຶ້ນທະບຽນອາກອນມູນຄ່າເພີ່ມຢູ່ ສປປລາວ**

ຜູ້ດຳເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ຫາກໄດ້ຮັບການສະໜອງການບໍລິການ ຈາກຜູ້ທີ່ບໍ່ມີພູມລຳເນົາ ແລະບໍ່ໄດ້ຂຶ້ນທະບຽນອາກອນມູນຄ່າເພີ່ມ ຢູ່ ສປປ ລາວ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 9 ຂໍ້ 3 ຂອງກົດໝາຍສະບັບນີ້ ຕ້ອງຫັກອາກອນມູນຄ່າເພີ່ມອອກໄວ້ ໃນເວລາທີ່ຈະມີການຊຳລະເງິນໃຫ້ແກ່ຜູ້ທີ່ບໍ່ມີພູມລຳເນົາ ແລະບໍ່ໄດ້ຂຶ້ນທະບຽນອາກອນມູນຄ່າເພີ່ມ ຢູ່ ສປປ ລາວ ແລະໃຫ້ມອບເງິນອາກອນພ້ອມດຽວກັນກັບເວລາແຈ້ງມອບອາກອນປົກກະຕິ ຕາມໄລຍະການບັນຊີ ຊຶ່ງໄດ້ບົ່ງໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້.

ຜູ້ດຳເນີນທຸລະກິດທີ່ບໍ່ໄດ້ຢູ່ໃນລະບົບອາກອນມູນຄ່າເພີ່ມ ຫາກໄດ້ຮັບການສະໜອງການບໍລິການຈາກຜູ້ທີ່ບໍ່ມີພູມລຳເນົາ ແລະບໍ່ໄດ້ຂຶ້ນທະບຽນອາກອນມູນຄ່າເພີ່ມ ຢູ່ ສປປ ລາວ ຕ້ອງຫັກອາກອນມູນຄ່າເພີ່ມອອກໄວ້ ແລ້ວມອບໃຫ້ແກ່ລັດ ພາຍໃນກຳນົດສາມສິບວັນ ນັບແຕ່ວັນທີ່ໄດ້ຊຳລະເງິນໃຫ້ແກ່ຜູ້ທີ່ບໍ່ມີພູມລຳເນົາ ແລະບໍ່ໄດ້ຂຶ້ນທະບຽນອາກອນມູນຄ່າເພີ່ມ ຢູ່ ສປປ ລາວ.

**ມາດຕາ 30. ຕົວແທນ ຫລື ຜູ້ຕາງໜ້າ**

ການສະໜອງສິນຄ້າ, ເຄື່ອງຂອງ ຫລື ການບໍລິການ ໂດຍບຸກຄົນໃດໜຶ່ງ ໃນນາມເປັນຕົວແທນ ຫລື ຜູ້ຕາງໜ້າໃຫ້ແກ່ບຸກຄົນອື່ນ ຊຶ່ງເປັນເຈົ້າຂອງກິດຈະການທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ຖືວ່າແມ່ນການດຳເນີນກິດຈະການ ທີ່ຕ້ອງເສຍອາກອນມູນຄ່າເພີ່ມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 31. ຜູ້ທີ່ບໍ່ຢູ່ໃນລະບົບອາກອນມູນຄ່າເພີ່ມ**

ຜູ້ດຳເນີນທຸລະກິດ ທີ່ບໍ່ຖືກຈັດເຂົ້າໃນລະບົບອາກອນມູນຄ່າເພີ່ມ ຕາມກົດໝາຍສະບັບນີ້ ຈະຖືກເສຍອາກອນຕົວເລກທຸລະກິດ ຈາກການຂາຍສິນຄ້າ, ເຄື່ອງຂອງ ແລະການບໍລິການ ຕາມກົດໝາຍວ່າດ້ວຍສ່ວຍສາອາກອນ.

# ພາກທີ IV
# ການຈັດຕັ້ງປະຕິບັດ

## ໝວດທີ 1
## ການແຈ້ງມອບ ແລະການມອບ ອາກອນມູນຄ່າເພີ່ມ

**ມາດຕາ 32. ການແຈ້ງມອບອາກອນມູນຄ່າເພີ່ມ**

ການແຈ້ງມອບອາກອນມູນຄ່າເພີ່ມ ໃຫ້ປະຕິບັດດັ່ງນີ້ :

- ຜູ້ດຳເນີນທຸລະກິດ ຕ້ອງຍື່ນໃບແຈ້ງມອບອາກອນມູນຄ່າເພີ່ມເປັນແຕ່ລະເດືອນ ແລະບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປ ນຳລັດຖະການສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ;
- ໃນກໍລະນີທີ່ບໍ່ມີອາກອນມູນຄ່າເພີ່ມໃນເບື້ອງສິ້ນເຂົ້າ ແລະເບື້ອງສິ້ນອອກ ຜູ້ດຳເນີນທຸລະກິດກໍຕ້ອງຍື່ນໃບແຈ້ງມອບອາກອນມູນຄ່າເພີ່ມ ຊຶ່ງຕ້ອງປະກອບຂໍ້ມູນໃຫ້ຄົບຖ້ວນ ແລະຖືກຕ້ອງ ໃສ່ແບບພິມໃບແຈ້ງ ໃຫ້ແກ່ລັດຖະການສ່ວຍສາອາກອນຕາມລະບຽບການ;
- ໃນກໍລະນີທີ່ຜູ້ດຳເນີນທຸລະກິດຖືກຈັດເຂົ້າໃນລະບົບອາກອນມູນຄ່າເພີ່ມ ຕ້ອງຍື່ນໃບແຈ້ງມອບອາກອນມູນຄ່າເພີ່ມ ນັບແຕ່ວັນທີ່ໄດ້ເຂົ້າໃນລະບົບອາກອນມູນຄ່າເພີ່ມນັ້ນ ມີຜົນໃຊ້ໄດ້;
- ຜູ້ນຳເຂົ້າສິນຄ້າ, ເຄື່ອງຂອງ ແລະການບໍລິການ ຈະຕ້ອງແຈ້ງມອບອາກອນມູນຄ່າເພີ່ມ ໃນແຕ່ລະຄັ້ງທີ່ມີການນຳເຂົ້າ ໃນເວລາດຽວກັນກັບການແຈ້ງເສຍພາສີຂາເຂົ້າ.

ວິທີການແຈ້ງມອບລະອຽດ ແລະແບບພິມໃບແຈ້ງອາກອນມູນຄ່າເພີ່ມ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 33. ການມອບອາກອນມູນຄ່າເພີ່ມ**

ຜູ້ດຳເນີນທຸລະກິດທີ່ຕ້ອງມອບອາກອນມູນຄ່າເພີ່ມ ໃຫ້ປະຕິບັດດັ່ງນີ້ :

- ໃນກໍລະນີຈຳໜ່າຍສິນຄ້າ, ເຄື່ອງຂອງ ແລະການບໍລິການນັ້ນ ອາກອນມູນຄ່າເພີ່ມ ຕ້ອງມອບເປັນແຕ່ລະເດືອນ ກ່ອນວັນທີ 15 ຂອງເດືອນຖັດໄປ;
- ໃນກໍລະນີນຳເຂົ້າສິນຄ້າ, ເຄື່ອງຂອງຈາກຕ່າງປະເທດນັ້ນ ອາກອນມູນຄ່າເພີ່ມ ຕ້ອງມອບໃຫ້ຄົບຖ້ວນໃນເວລາດຽວກັນກັບການມອບຄ່າພາສີຂາເຂົ້າ;
- ຖ້າວ່າອາກອນມູນຄ່າເພີ່ມໃນເບື້ອງສິ້ນເຂົ້າ ໃນໄລຍະການບັນຊີໃດໜຶ່ງ ຫາກສູງກວ່າອາກອນມູນຄ່າເພີ່ມໃນເບື້ອງສິ້ນອອກ ສ່ວນຜິດດ່ຽງຈະຖືກຍົກໄປຫັກອອກໃນໄລຍະແຈ້ງມອບອາກອນໃນຄັ້ງຕໍ່ໄປ;
- ອາກອນມູນຄ່າເພີ່ມ ຕ້ອງມອບເປັນເງິນກີບເຂົ້າງົບປະມານແຫ່ງລັດ.

## ໝວດທີ 2
## ການຖືບັນຊີ ແລະໃບເກັບເງິນ

**ມາດຕາ 34. ການຖືບັນຊີ**

ການຖືບັນຊີແມ່ນຂະບວນການບັນທຶກທຸກການເຄື່ອນໄຫວທຸລະກິດ ຊຶ່ງໃນນັ້ນ ໃຫ້ຈົດກ່າຍຂໍ້ມູນທີ່ສຳຄັນຕົ້ນຕໍ ຢູ່ໃນໃບເກັບເງິນຂອງຜູ້ດຳເນີນທຸລະກິດຢ່າງເປັນລະບົບ ແລະຕໍ່ເນື່ອງ ເຂົ້າໃນປຶ້ມບັນຊີ ຕາມລະບຽບກົດໝາຍ.

ຜູ້ດຳເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ຕ້ອງຖືບັນຊີເພື່ອຕິດຕາມ, ບັນທຶກ, ຈົດກ່າຍ ແລະເກັບຮັກສາສຳນວນໃບເກັບເງິນ, ໃບຢັ້ງຢືນ, ປຶ້ມບັນຊີທີ່ມີສ່ວນກ່ຽວພັນກັບອາກອນມູນຄ່າເພີ່ມ ໃຫ້ຖືກຕ້ອງ ແລະຄົບຖ້ວນ.

ທຸກເອກະສານການບັນຊີທີ່ນຳໃຊ້ແລ້ວ ຕ້ອງເກັບຮັກສາໄວ້ພາຍໃນກຳນົດສິບປີ ແລະໃຫ້ນຳສະເໜີໄດ້ທຸກເວລາ ຖ້າຫາກມີການກວດກາຂອງເຈົ້າໜ້າທີ່ກວດກາ.

### ມາດຕາ 35. ໃບເກັບເງິນ

ໃບເກັບເງິນແມ່ນເອກະສານຢັ້ງຢືນ ການຊື້-ຂາຍສິນຄ້າ, ເຄື່ອງຂອງ ແລະການບໍລິການ, ການຈ່າຍອາກອນມູນຄ່າເພີ່ມໃນເວລາຊື້, ການເກັບອາກອນມູນຄ່າເພີ່ມໃນເວລາຂາຍ, ການຫັກ ແລະການຂໍຄືນອາກອນມູນຄ່າເພີ່ມ.

ທຸກການຊື້-ຂາຍສິນຄ້າ, ເຄື່ອງຂອງ ແລະການບໍລິການ ຕ້ອງມີໃບເກັບເງິນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ດັ່ງນີ້ :

1. ຜູ້ດຳເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ຕ້ອງອອກໃບເກັບເງິນທີ່ມີອາກອນມູນຄ່າເພີ່ມ ແລະຕ້ອງປະກອບຂໍ້ມູນໃສ່ໃຫ້ຄົບຖ້ວນ, ຖືກຕ້ອງ ຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນແບບພິມໃບເກັບເງິນ ຊຶ່ງໃນນັ້ນ ໃຫ້ຂຽນແຈ້ງລາຄາຂາຍທີ່ບໍ່ທັນມີອາກອນມູນຄ່າເພີ່ມ, ຄ່າທຳນຽມທີ່ໄດ້ຮັບ (ຖ້າມີ), ຈຳນວນເງິນອາກອນມູນຄ່າເພີ່ມ ແລະລາຄາຂາຍລວມອາກອນມູນຄ່າເພີ່ມໃຫ້ແກ່ລູກຄ້າຂອງຕົນ. ໃນກໍລະນີທີ່ຜູ້ດຳເນີນທຸລະກິດ ບໍ່ຂຽນຈຳນວນເງິນອາກອນມູນຄ່າເພີ່ມໃສ່ໃບເກັບເງິນໃນເວລາຂາຍ ເຈົ້າໜ້າທີ່ສ່ວຍສາອາກອນຕ້ອງຖືເອົາມູນຄ່າຂາຍ ຢູ່ໃນໃບເກັບເງິນນັ້ນ ເພື່ອເປັນພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ;
2. ຜູ້ດຳເນີນທຸລະກິດທີ່ບໍ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ກໍຕ້ອງໄດ້ອອກໃບເກັບເງິນ ແຕ່ບໍ່ມີສິດຂຽນຈຳນວນເງິນອາກອນມູນຄ່າເພີ່ມໃສ່ໃນໃບເກັບເງິນ ໃຫ້ແກ່ລູກຄ້າຂອງຕົນ;
3. ໃນກໍລະນີທີ່ຜູ້ຂາຍບໍ່ອອກໃບເກັບເງິນໃຫ້ ຜູ້ຊື້ຕ້ອງທວງເອົາໃບເກັບເງິນໃນເວລາຊື້ຈາກຜູ້ຂາຍ;
4. ສຳລັບສະແຕມ, ປີ້, ບັດ ທີ່ໄດ້ພິມມູນຄ່າໃສ່ພ້ອມແລ້ວນັ້ນ ໃຫ້ຖືວ່າແມ່ນໃບເກັບເງິນທີ່ຢັ້ງຢືນການຊຳລະ ຊຶ່ງລວມມີຈຳນວນເງິນອາກອນມູນຄ່າເພີ່ມຢູ່ນຳແລ້ວ.

### ມາດຕາ 36. ສິນຄ້າຄ້າງສາງ ແລະການຫັກອາກອນ

ຜູ້ດຳເນີນທຸລະກິດທີ່ມີສິນຄ້າຄ້າງສາງ ຮອດມື້ທີ່ກົດໝາຍວ່າດ້ວຍ ອາກອນມູນຄ່າເພີ່ມມີຜົນບັງຄັບໃຊ້ ແລະຈະຖືກຈັດເຂົ້າໃນລະບົບອາກອນມູນຄ່າເພີ່ມ ຕ້ອງດຳເນີນການກວດກາຈຳນວນ, ປະເພດ, ມູນຄ່າຂອງສິນຄ້າຄ້າງສາງ ແລະຈຳນວນເງິນອາກອນຕົວເລກທຸລະກິດ ທີ່ໄດ້ຈ່າຍໃນເວລາຊື້ສິນຄ້າດັ່ງກ່າວ ເພື່ອລາຍງານ ແລະແຈ້ງຕໍ່ລັດຖະການສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ.

ຈຳນວນເງິນອາກອນຕົວເລກທຸລະກິດທີ່ໄດ້ຈ່າຍໃນເວລາຊື້ສິນຄ້າດັ່ງກ່າວ ຈະຖືກອະນຸຍາດໃຫ້ຫັກອອກຈາກອາກອນມູນຄ່າເພີ່ມທີ່ຕ້ອງຈ່າຍພາຍໃນເດືອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້ ນັບແຕ່ວັນທີ່ມີຜົນບັງຄັບໃຊ້ເປັນຕົ້ນໄປ.

**ມາດຕາ 37. ການກວດກາບັນຊີ**

ການກວດກາບັນຊີຂອງຜູ້ດຳເນີນທຸລະກິດ ທີ່ຖືກເສຍອາກອນມູນຄ່າເພີ່ມ ແມ່ນເພື່ອຮັບປະກັນການປະຕິບັດພັນທະ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະທັນເວລາ.

ການກວດກາ ສາມາດດຳເນີນການ ຢູ່ໃນສະຖານທີ່ ດັ່ງນີ້ :

- ການກວດກາເອກະສານການບັນຊີ ຂອງຜູ້ດຳເນີນທຸລະກິດຢູ່ຫ້ອງການສ່ວຍສາອາກອນ;
- ການກວດກາການບັນຊີກັບທີ່ຢູ່ສຳນັກງານຂອງຜູ້ດຳເນີນທຸລະກິດ;
- ການກວດກາຕົວຈິງຢູ່ສະຖານທີ່ກ່ຽວຂ້ອງ ເຊັ່ນ: ການກວດກາ ສິນຄ້າ, ເຄື່ອງຂອງຢູ່ໃນສາງ, ການກວດກາການເຄື່ອນຍ້າຍ ສິນຄ້າ, ເຄື່ອງຂອງຢູ່ພາຍໃນປະເທດ.

ການກວດກາ ສາມາດດຳເນີນການຕາມຮູບການ ປົກກະຕິ, ແຈ້ງໃຫ້ຮູ້ລ່ວງໜ້າ ແລະກະທັນຫັນ.

ເຈົ້າໜ້າທີ່ກວດກາ ຕ້ອງປະຕິບັດຕາມລະບຽບກົດໝາຍ ແລະຜູ້ຖືກກວດກາຕ້ອງໃຫ້ຄວາມຮ່ວມມື. ພາຍຫລັງທີ່ສຳເລັດການກວດກາທຸກໆຄັ້ງ ເຈົ້າໜ້າທີ່ກວດກາຕ້ອງເຮັດບົດບັນທຶກການກວດກາເປັນລາຍລັກອັກສອນ ໂດຍຊ້ອງໜ້າຜູ້ດຳເນີນທຸລະກິດທີ່ຖືກກວດກາ, ຫລັງຈາກນັ້ນ ຕ້ອງອ່ານໃຫ້ຜູ້ກ່ຽວຟັງທຸກຂໍ້ຄວາມ ແລະ ພ້ອມກັນລົງລາຍເຊັນໃສ່ບົດບັນທຶກດັ່ງກ່າວໄວ້ເປັນຫລັກຖານ.

## ໝວດທີ 3
## ການແກ້ໄຂຄຳສະເໜີ ກ່ຽວກັບອາກອນມູນຄ່າເພີ່ມ

**ມາດຕາ 38. ການສະເໜີຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດທີ່ຖືກເສຍອາກອນມູນຄ່າເພີ່ມ ມີສິດຍື່ນຄຳສະເໜີກ່ຽວກັບການປະຕິບັດອາກອນມູນຄ່າເພີ່ມ ທີ່ຕົນເຫັນວ່າບໍ່ຖືກຕ້ອງຕາມລະບຽບກົດໝາຍ. ຄຳສະເໜີຕ້ອງຍື່ນຕໍ່ລັດຖະການສ່ວຍສາອາ ກອນ ບ່ອນທີ່ຕົນຂຶ້ນກັບໂດຍກົງ ພາຍໃນກຳນົດສາມສິບວັນ ນັບແຕ່ວັນທີ່ໄດ້ຮັບໃບສັ່ງມອບ ຫລື ໃບແຈ້ງການ ຂອງລັດຖະການສ່ວຍສາອາກອນ ຫລື ທີ່ໄດ້ພົບເຫັນເຫດການທີ່ຕົນເຫັນວ່າບໍ່ຖືກຕ້ອງນັ້ນ ເປັນຕົ້ນໄປ.

ໃນໄລຍະລໍຖ້າການແກ້ໄຂຄຳສະເໜີກ່ຽວກັບການເສຍອາກອນມູນຄ່າເພີ່ມນັ້ນ ຜູ້ດຳເນີນທຸລະກິດຕ້ອງມອບເງິນເປັນການຄ້ຳປະກັນ ຫ້າສິບສ່ວນຮ້ອຍຂອງຈຳນວນເງິນອາກອນມູນຄ່າເພີ່ມ ຕາມໃບສັ່ງມອບນັ້ນ ໄວ້ນຳກອງທຶນສົ່ງຄືນອາກອນມູນຄ່າເພີ່ມ ຊົ່ວຄາວ.

ຖ້າວ່າຜູ້ດຳເນີນທຸລະກິດ ຫາກຍື່ນຄຳສະເໜີບໍ່ຖືກຕາມກຳນົດເວລາດັ່ງກ່າວ ລັດຖະການສ່ວຍສາອາກອນ ຈະບໍ່ຮັບພິຈາລະນາແກ້ໄຂຄຳສະເໜີນັ້ນ.

**ມາດຕາ 39. ການພິຈາລະນາແກ້ໄຂຄຳສະເໜີ**

ຄຳສະເໜີຂອງຜູ້ດຳເນີນທຸລະກິດ ຈະຖືກພິຈາລະນາແກ້ໄຂດັ່ງນີ້ :

1. ເມື່ອລັດຖະການສ່ວຍສາອາກອນໄດ້ຮັບຄຳສະເໜີ ກ່ຽວກັບການປະຕິບັດອາກອນມູນຄ່າເພີ່ມ ຈາກຜູ້ດຳເນີນທຸລະກິດ ຕ້ອງພິຈາລະນາແກ້ໄຂພາຍໃນກຳນົດສິບວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບຄຳສະເໜີນັ້ນ ເປັນຕົ້ນໄປ, ສຳລັບກໍລະນີອື່ນທີ່ມີຄວາມຫຍຸ້ງຍາກສັບສົນ ກໍສາມາດຕໍ່ເວລານັ້ນໄດ້ ແຕ່ບໍ່ໃຫ້ເກີນສາມສິບວັນລັດຖະການ;
2. ຜູ້ດຳເນີນທຸລະກິດຕ້ອງປະຕິບັດຕາມການຕົກລົງແກ້ໄຂຂອງລັດຖະການສ່ວຍສາອາກອນ, ຖ້າຫາກບໍ່ເຫັນດີ ນຳການຕົກລົງແກ້ໄຂນັ້ນ ກໍມີສິດສະເໜີພາຍໃນກຳນົດສິບວັນລັດຖະການໃຫ້ ລັດຖະການສ່ວຍສາອາກອນຂັ້ນເທິງຖັດນັ້ນ ພິຈາລະນາແກ້ໄຂເປັນຂັ້ນສຸດທ້າຍ;
3. ສຳລັບບັນຫາໃດທີ່ບໍ່ຂຶ້ນກັບສິດໜ້າທີ່ໃນການແກ້ໄຂຢູ່ຂັ້ນຂອງຕົນ ລັດຖະການສ່ວຍສາອາກອນ ຕ້ອງນຳສິ່ງສຳນວນເອກະສານ ຫລື ລາຍງານໃຫ້ແກ່ຂັ້ນເທິງຂອງຕົນຖັດນັ້ນ ພິຈາລະນາແກ້ໄຂເຊັ່ນດຽວກັນ;
4. ລັດຖະການສ່ວຍສາອາກອນທີ່ໄດ້ຮັບຄຳສະເໜີ ມີສິດທວງໃຫ້ຜູ້ສະເໜີສະໜອງບັນດາເອກະສານ, ຂໍ້ມູນຕ່າງໆ ທີ່ກ່ຽວຂ້ອງກັບການສະເໜີນັ້ນ, ຖ້າບໍ່ມີການສະໜອງເອກະສານຂໍ້ມູນນັ້ນແລ້ວ ລັດຖະການສ່ວຍສາອາກອນ ກໍມີສິດປະຕິເສດການພິຈາລະນາແກ້ໄຂຄຳສະເໜີດັ່ງກ່າວ;
5. ຖ້າລັດຖະການສ່ວຍສາອາກອນຂັ້ນເທິງຖັດທີ່ມີສິດໜ້າທີ່ກ່ຽວຂ້ອງໄດ້ຕົກລົງວ່າ ການປະຕິບັດ ອາກອນມູນຄ່າເພີ່ມ ເປັນຕົ້ນ ການຄິດໄລ່ ແລະຄ່າປັບໃໝ ບໍ່ຖືກຕ້ອງແລ້ວ ລັດຖະການ ສ່ວຍສາອາກອນ ຕ້ອງແກ້ໄຂ ໂດຍສະເພາະສິ່ງຈຳນວນເງິນທີ່ຄິດໄລ່ເກັບເອົາບໍ່ຖືກຕ້ອງ ຄືນ ໃຫ້ຜູ້ດຳເນີນທຸລະກິດພາຍໃນກຳນົດສິບຫ້າວັນລັດຖະການ ນັບແຕ່ວັນທີ່ໄດ້ມີການຕົກລົງເປັນຕົ້ນໄປ.

ໃນກໍລະນີທີ່ຜູ້ດຳເນີນທຸລະກິດ ຍັງບໍ່ເຫັນດີນຳການແກ້ໄຂຄຳສະເໜີ ຂອງລັດຖະການສ່ວຍສາອາກອນຂັ້ນສຸດທ້າຍ ກໍມີສິດດຳເນີນຕາມກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ.

# ພາກທີ V
# ການຄຸ້ມຄອງ ແລະ ກວດກາ ວຽກງານອາກອນມູນຄ່າເພີ່ມ

## ໝວດທີ 1
## ການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ

### ມາດຕາ 40. ອົງການຄຸ້ມຄອງອາກອນມູນຄ່າເພີ່ມ

ອົງການຄຸ້ມຄອງອາກອນມູນຄ່າເພີ່ມ ແມ່ນອົງການຈັດຕັ້ງລວມສູນເປັນເອກະພາບ ຕາມຂະແໜງການສາຍຕັ້ງແຕ່ສູນກາງລົງຮອດທ້ອງຖິ່ນ ເພື່ອຄຸ້ມຄອງ ແລະເກັບອາກອນມູນຄ່າເພີ່ມ ໃນຂອບເຂດທົ່ວປະເທດ.

ອົງການຄຸ້ມຄອງອາກອນມູນຄ່າເພີ່ມ ປະກອບດ້ວຍ :

- ກະຊວງການເງິນ;
- ລັດຖະການສ່ວຍສາອາກອນແຕ່ລະຂັ້ນ :
    - + ກົມສ່ວຍສາອາກອນ;
    - + ພະແນກສ່ວຍສາອາກອນ ປະຈຳແຂວງ, ນະຄອນ;
    - + ຫ້ອງການສ່ວຍສາອາກອນ ປະຈຳເມືອງ, ເທດສະບານ.

**ມາດຕາ 41. ສິດ ແລະໜ້າທີ່ ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ ກະຊວງການເງິນ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້ :

1. ຄົ້ນຄວ້າ, ສ້າງແຜນຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບອາກອນມູນຄ່າເພີ່ມ ເພື່ອສະເໜີລັດຖະບານພິຈາລະນາ;
2. ໂຄສະນາ, ເຜີຍແຜ່ກົດໝາຍ ແລະນິຕິກຳອື່ນໆ ກ່ຽວກັບອາກອນມູນຄ່າເພີ່ມ ຕາມພາລະບົດບາດຂອງຕົນ;
3. ຊີ້ນຳ, ຕິດຕາມ ແລະກວດກາການຈັດຕັ້ງປະຕິບັດກົດໝາຍ ແລະນິຕິກຳອື່ນໆ ກ່ຽວກັບອາກອນມູນຄ່າເພີ່ມ;
4. ຊີ້ນຳວຽກງານວິຊາສະເພາະ, ຄຸ້ມຄອງ ແລະສ້າງບຸກຄະລາກອນ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ປະຕິບັດນະໂຍບາຍ ຫລື ວິໄນ ຕໍ່ພະນັກງານທີ່ຮັບຜິດຊອບວຽກງານອາກອນມູນຄ່າເພີ່ມ, ສະໜອງງົບປະມານ ແລະປະກອບພາຫະນະ, ອຸປະກອນເຕັກນິກ ຮັບໃຊ້ກິດຈັກອາກອນມູນຄ່າເພີ່ມ;
5. ປະສານສົມທົບ ກັບບັນດາອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງກັບວຽກງານອາກອນມູນຄ່າເພີ່ມ;
6. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະສາກົນ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ;
7. ຮັບຜິດຊອບຕໍ່ລັດຖະບານໃນການຄຸ້ມຄອງ, ກວດກາການຈັດຕັ້ງປະຕິບັດວຽກງານອາກອນມູນຄ່າເພີ່ມ ໃນຂອບເຂດທົ່ວປະເທດ;
8. ສະຫລຸບ ແລະລາຍງານ ຕໍ່ລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານອາກອນມູນຄ່າເພີ່ມ.

**ມາດຕາ 42. ສິດ ແລະໜ້າທີ່ ຂອງກົມສ່ວຍສາອາກອນ**

ກົມສ່ວຍສາອາກອນ ເປັນເສນາທິການໃຫ້ກະຊວງການເງິນ ໃນການຈັດຕັ້ງປະຕິບັດສິດ ແລະໜ້າທີ່ຂອງກະຊວງການເງິນ ທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້, ນອກຈາກນີ້ກໍຍັງມີສິດ ແລະໜ້າທີ່ໃນການຈັດຕັ້ງ, ຄຸ້ມຄອງ, ເກັບ ແລະຕິກລົງການສົ່ງຄືນ ອາກອນມູນຄ່າເພີ່ມ.

**ມາດຕາ 43. ສິດ ແລະໜ້າທີ່ ໃນການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ ຂອງພະແນກສ່ວຍສາອາກອນປະຈຳແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ ພະແນກສ່ວຍສາອາກອນ ປະຈຳແຂວງ, ນະຄອນ ມີສິດ ແລະໜ້າທີ່ຕົ້ນຕໍດັ່ງນີ້ :

1. ຄົ້ນຄວ້າ ແລະປະກອບຄຳເຫັນ ໃສ່ຮ່າງແຜນຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບອາກອນມູນຄ່າເພີ່ມ;
2. ສ້າງແຜນເກັບລາຍຮັບອາກອນມູນຄ່າເພີ່ມປະຈຳປີ ຂອງແຂວງ, ນະຄອນ;
3. ຮັບຜິດຊອບຕໍ່ກະຊວງການເງິນໃນການຄຸ້ມຄອງ ແລະກວດກາການຈັດຕັ້ງປະຕິບັດການເກັບອາກອນມູນຄ່າເພີ່ມໃຫ້ຄົບຖ້ວນ ຖືກຕ້ອງຕາມລະບຽບກົດໝາຍ;
4. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ແລະກວດກາ ການປະຕິບັດໜ້າທີ່ຂອງຫ້ອງການສ່ວຍສາອາກອນປະຈຳເມືອງ, ເທດສະບານ ແລະພະນັກງານທີ່ຮັບຜິດຊອບອາກອນມູນຄ່າເພີ່ມ ທີ່ຂຶ້ນກັບຕົນ;
5. ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ ແລະນິຕິກຳອື່ນໆ ທີ່ພົວພັນກັບວຽກງານອາກອນມູນຄ່າເພີ່ມ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ສະເໜີເຈົ້າແຂວງ, ເຈົ້າຄອງນະຄອນ ເພື່ອນຳສະເໜີຕໍ່ລັດຖະມົນຕີວ່າການກະຊວງການເງິນພິຈາລະນາຍ້ອງຍໍ ຜູ້ມີຜົນງານ ແລະປະຕິບັດວິໄນ ຕໍ່ຜູ້ລະເມີດລະບຽບກົດໝາຍ;
7. ສະເໜີເຈົ້າແຂວງ, ເຈົ້າຄອງນະຄອນ ເພື່ອສະເໜີຕໍ່ລັດຖະມົນຕີວ່າການກະຊວງການເງິນ ພິຈາລະນາກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ພະນັກງານທີ່ຮັບຜິດຊອບອາກອນມູນຄ່າເພີ່ມ ທີ່ຂຶ້ນກັບຕົນ;
8. ສະຫລຸບ ແລະລາຍງານ ການຈັດຕັ້ງປະຕິບັດ ວຽກງານອາກອນມູນຄ່າເພີ່ມ ໃຫ້ກະຊວງການເງິນຊາບ;

**ມາດຕາ 44. ສິດ ແລະໜ້າທີ່ ໃນການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ ຂອງຫ້ອງການສ່ວຍສາອາກອນປະຈຳເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ ຫ້ອງການສ່ວຍສາອາກອນ ປະຈຳເມືອງ, ເທດສະບານ ມີສິດ ແລະໜ້າທີ່ຕົ້ນຕໍ ດັ່ງນີ້ :

1. ຄົ້ນຄວ້າ ແລະປະກອບຄຳເຫັນ ໃສ່ຮ່າງແຜນຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບອາກອນມູນຄ່າເພີ່ມ;
2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ ແລະນິຕິກຳອື່ນໆ ທີ່ພົວພັນກັບວຽກງານອາກອນມູນຄ່າເພີ່ມ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ເປັນເຈົ້າການຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະເກັບອາກອນມູນຄ່າເພີ່ມ ໃນຂອບເຂດເມືອງ, ເທດສະບານຂອງຕົນຮັບຜິດຊອບ;

4. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ແລະກວດກາ ການຈັດຕັ້ງປະຕິບັດໜ້າທີ່ ຂອງພະນັກງານທີ່ຮັບຜິດຊອບອາກອນມູນຄ່າເພີ່ມ ທີ່ຂຶ້ນກັບຕົນ;
5. ສະຫລຸບ ແລະລາຍງານ ການຈັດຕັ້ງປະຕິບັດ ວຽກງານອາກອນມູນຄ່າເພີ່ມ ໃຫ້ພະແນກສ່ວຍສາອາກອນຊາບ.

## ໝວດທີ 2
## ການກວດກາວຽກງານອາກອນມູນຄ່າເພີ່ມ

### ມາດຕາ 45. ອົງການກວດກາ

ອົງການກວດກາ ປະກອບດ້ວຍ : ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

1. ອົງການກວດກາພາຍໃນ ມີດັ່ງນີ້ :
   - ກະຊວງການເງິນ;
   - ລັດຖະການສ່ວຍສາອາກອນແຕ່ລະຂັ້ນ.
2. ອົງການກວດກາພາຍນອກ ມີດັ່ງນີ້ :
   - ຄະນະກຳມະການກວດກາ;
   - ອົງການກວດສອບແຫ່ງລັດ.

ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະພາກສ່ວນອື່ນທີ່ກ່ຽວຂ້ອງ ມີໜ້າທີ່ເຂົ້າຮ່ວມໃນການກວດກາການຈັດຕັ້ງປະຕິບັດອາກອນມູນຄ່າເພີ່ມ ຕາມພາລະບົດບາດຂອງຕົນ.

### ມາດຕາ 46. ສິດ ແລະໜ້າທີ່ ຂອງອົງການກວດກາພາຍໃນ

ອົງການກວດກາພາຍໃນ ມີສິດ ແລະໜ້າທີ່ ກວດກາຢ່າງເປັນລະບົບປົກກະຕິໃນການຈັດຕັ້ງປະຕິບັດລະບຽບກົດໝາຍ, ການປະຕິບັດສິດ ແລະໜ້າທີ່ຂອງພະນັກງານທີ່ຮັບຜິດຊອບອາກອນມູນຄ່າເພີ່ມແຕ່ລະຂັ້ນ ເປັນຕົ້ນກ່ຽວກັບການຄິດໄລ່, ການເກັບ, ການຫັກ ແລະການສົ່ງຄືນ ອາກອນມູນຄ່າເພີ່ມ.

### ມາດຕາ 47. ສິດ ແລະໜ້າທີ່ ຂອງອົງການກວດກາພາຍນອກ

ອົງການກວດກາພາຍນອກ ມີສິດ ແລະໜ້າທີ່ ກວດກາການປະຕິບັດໜ້າທີ່ຂອງພະນັກງານທີ່ຮັບຜິດຊອບອາກອນມູນຄ່າເພີ່ມ ລວມທັງກວດກາການປະຕິບັດອາກອນມູນຄ່າເພີ່ມ ຂອງອົງການ ແລະການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ວຽກງານອາກອນມູນຄ່າເພີ່ມມີປະສິດທິພາບ, ມີຄວາມໂປ່ງໃສ ແລະ ຍຸຕິທຳ.

### ມາດຕາ 48. ຮູບການກວດກາ

ການກວດກາ ມີສາມຮູບການ ດັ່ງນີ້ :

- ການກວດກາຕາມລະບົບປົກກະຕິ;
- ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
- ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ໝວດທີ 1
### ນະໂຍບາຍຕໍ່ຜູ້ມີຜົນງານ

**ມາດຕາ 49. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະການຈັດຕັ້ງ ທີ່ໄດ້ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ໃຫ້ມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນໆ ຕາມລະບຽບການ.

**ມາດຕາ 50. ນະໂຍບາຍຕໍ່ຜູ້ມອບອາກອນ**

ຜູ້ມອບອາກອນມູນຄ່າເພີ່ມ ທີ່ປະຕິບັດພັນທະຂອງຕົນຢ່າງຖືກຕ້ອງ, ຄົບຖ້ວນ ແລະທັນເວລາ ຈະໄດ້ຮັບການຍ້ອງຍໍ ແລະຄວາມສະດວກຕ່າງໆ ຢ່າງເໝາະສົມໃນການເຄື່ອນໄຫວທຸລະກິດ ຕາມລະບຽບກົດໝາຍ.

### ໝວດທີ 2
### ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 51 . ມາດຕະການຕໍ່ຜູ້ລະເມີດ**

ຜູ້ລະເມີດລະບຽບກົດໝາຍ ກ່ຽວກັບອາກອນມູນຄ່າເພີ່ມ ຈະຖືກສຶກສາອົບຮົມ, ປັບໃໝ, ປະຕິບັດວິໄນ, ໃຊ້ແທນທາງແພ່ງ ຫລື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫລື ໜັກ.

## ມາດຕາ 52 . ມາດຕະການຕໍ່ຜູ້ດໍາເນີນທຸລະກິດ ແລະ ບຸກຄົນອື່ນ

ຜູ້ດໍາເນີນທຸລະກິດທີ່ຕ້ອງມອບອາກອນມູນຄ່າເພີ່ມ ຊຶ່ງໄດ້ລະເມີດຂໍ້ກໍານົດກ່ຽວກັບການຂຶ້ນທະບຽນອາກອນມູນຄ່າເພີ່ມ, ການຍື່ນໃບແຈ້ງ ແລະການມອບອາກອນມູນຄ່າເພີ່ມ ຈະຖືກປະຕິບັດມາດຕະການເປັນແຕ່ລະກໍລະນີ ດັ່ງນີ້ :

1. ຜູ້ດໍາເນີນທຸລະກິດ ທີ່ມີລາຍຮັບທຸລະກິດເກີນລະດັບທີ່ໄດ້ກໍານົດໄວ້ໃນວັກທີ 1 ມາດຕາ 13 ຂອງກົດໝາຍສະບັບນີ້ ແຕ່ບໍ່ປະກອບຄໍາຮ້ອງເພື່ອຂຶ້ນທະບຽນອາກອນມູນຄ່າເພີ່ມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ. ໃນກໍລະນີທີ່ບໍ່ປະຕິບັດຕາມການສຶກສາອົບຮົມ ຈະຖືກປັບໃໝໃນອັດຕາ ຫ້າສິບສ່ວນຮ້ອຍ ຂອງຄ່າທໍານຽມຂຶ້ນທະບຽນອາກອນມູນຄ່າເພີ່ມ;
2. ຜູ້ດໍາເນີນທຸລະກິດ ທີ່ບໍ່ນໍາໃຊ້ເລກປະຈໍາຕົວຜູ້ມອບອາກອນ ທີ່ລັດຖະການສ່ວຍສາອາກອນອອກໃຫ້ ໃສ່ໃນເອກະສານຂອງຕົນ ຈະຖືກປັບໃໝ 200.000 ກີບ ຕໍ່ຄັ້ງ;
3. ຜູ້ດໍາເນີນທຸລະກິດ ທີ່ຍື່ນໃບແຈ້ງ ຫລື ມອບອາກອນມູນຄ່າເພີ່ມ ໂດຍບໍ່ຖືກຕ້ອງຕາມກໍານົດເວລາທີ່ໄດ້ບົ່ງໄວ້ໃນກົດໝາຍສະບັບນີ້ ຈະຖືກປັບໃໝໃນອັດຕາ ຫ້າສ່ວນຮ້ອຍ ຂອງອາກອນມູນຄ່າເພີ່ມ ທີ່ຕ້ອງມອບໃນແຕ່ລະເດືອນ ທີ່ຊັກຊ້າ. ບໍ່ວ່າໃນກໍລະນີໃດ ຄ່າປັບໃໝນັ້ນ ແມ່ນບໍ່ໃຫ້ເກີນຈໍານວນເງິນອາກອນມູນຄ່າເພີ່ມທີ່ຕ້ອງມອບ;
4. ຜູ້ດໍາເນີນທຸລະກິດທີ່ບໍ່ຍື່ນໃບແຈ້ງ ຫລື ແຈ້ງມອບອາກອນມູນຄ່າເພີ່ມ ບໍ່ຄົບຖ້ວນ ລັດຖະການສ່ວຍສາອາກອນ ຕ້ອງເລັ່ງທວງໃຫ້ປະຕິບັດ.ໃນກໍລະນີທີ່ບໍ່ໄດ້ປະຕິບັດ ໃຫ້ນໍາໃຊ້ມາດຕະການດັ່ງນີ້ :
   - ຄັ້ງທີໜຶ່ງ ຕ້ອງມອບອາກອນມູນຄ່າເພີ່ມຄືນໃຫ້ຄົບຖ້ວນ ແລະຖືກປັບໃໝໃນອັດຕາ ສາມສິບສ່ວນຮ້ອຍ ຂອງຈໍານວນເງິນອາກອນມູນຄ່າເພີ່ມທີ່ຕ້ອງມອບ;
   - ຄັ້ງທີສອງ ຕ້ອງມອບອາກອນມູນຄ່າເພີ່ມຄືນໃຫ້ຄົບຖ້ວນ ແລະ ຖືກປັບໃໝໃນອັດຕາ ຫົກສິບສ່ວນຮ້ອຍ ຂອງຈໍານວນເງິນອາກອນມູນຄ່າເພີ່ມທີ່ຕ້ອງມອບ;
   - ຖ້າຍັງບໍ່ມາຍື່ນໃບແຈ້ງ ຫລື ແຈ້ງມອບອາກອນມູນຄ່າເພີ່ມ ບໍ່ຄົບຖ້ວນ ຫລັງຈາກໝົດກໍານົດຂອງໃບເລັ່ງທວງຄັ້ງທີສອງ ໃຫ້ຢຸດເຊົາກິດຈະການ ແລະ ຖອນໃບທະບຽນວິສາຫະກິດ, ໃບທະບຽນອາກອນ ໄວ້ເປັນການຊົ່ວຄາວໃນກໍານົດໜຶ່ງເດືອນ; ຖ້າໝົດກໍານົດໜຶ່ງເດືອນນີ້ແລ້ວ ໃຫ້ປະຕິບັດຕາມຂໍ້ 5 ລຸ່ມນີ້;
5. ຜູ້ດໍາເນີນທຸລະກິດທີ່ບໍ່ມອບອາກອນ, ຄ່າປັບໃໝ ພາຍຫລັງທີ່ໄດ້ຮັບໃບສັ່ງມອບອາກອນມູນຄ່າເພີ່ມ ຈະຖືກປະຕິບັດມາດຕະການ ດັ່ງນີ້ :

- ປັບໃໝໃນອັດຕາ ຫ້າສ່ວນຮ້ອຍ ຂອງຈຳນວນເງິນອາກອນທີ່ຕ້ອງມອບ ສຳລັບການອອກໃບເລັ່ງທວງຄັ້ງທີໜຶ່ງ, ສິບສ່ວນຮ້ອຍ ສຳລັບການອອກໃບເລັ່ງທວງຄັ້ງທີສອງ ແລະສິບຫ້າສ່ວນຮ້ອຍ ສຳລັບການອອກໃບເລັ່ງທວງຄັ້ງທີສາມ. ສຳລັບການອອກໃບເລັ່ງທວງແຕ່ລະຄັ້ງນັ້ນຕ້ອງໃຫ້ກຳນົດເວລາມອບອາກອນພາຍໃນສິບວັນ;
- ຖ້າຍັງບໍ່ມາມອບອາກອນ ຫລັງຈາກໝົດກຳນົດຂອງໃບເລັ່ງທວງຄັ້ງທີສາມ ໃຫ້ຢຸດເຊົາກິດຈະການ ແລະຖອນໃບທະບຽນວິສາຫະກິດ, ໃບທະບຽນອາກອນ ໄວ້ເປັນການຊົ່ວຄາວໃນກຳນົດໜຶ່ງ ເດືອນ; ເມື່ອໝົດກຳນົດໜຶ່ງເດືອນນີ້ແລ້ວ ຖ້າຫາກຍັງບໍ່ມາມອບອາກອນມູນຄ່າເພີ່ມ ໃຫ້ຢຸດເຊົາກິດຈະການຢ່າງຖາວອນ ພ້ອມທັງປະກອບສຳນວນແລະຍື່ນຄຳຮ້ອງຟ້ອງຕໍ່ສານ;
- ຫັກເອົາເງິນຂອງຜູ້ດຳເນີນທຸລະກິດຢູ່ໃນບັນຊີທະນາຄານ, ຄັງເງິນແຫ່ງຊາດ ແລະສະຖາບັນການເງິນ (ສິນເຊື່ອ) ເພື່ອເປັນການຊຳລະແທນການມອບອາກອນມູນຄ່າເພີ່ມ ແລະຄ່າປັບໃໝ.

ທະນາຄານ, ຄັງເງິນ ແລະ ສະຖາບັນການເງິນ ( ສິນເຊື່ອ ) ມີໜ້າທີ່ຫັກເອົາເງິນໃນບັນຊີເງິນຝາກຂອງຜູ້ດຳເນີນທຸລະກິດ ທີ່ບໍ່ມອບອາກອນ ແລະຄ່າປັບໃໝ ເພື່ອຊຳລະເຂົ້າງົບປະມານແຫ່ງລັດ ຕາມການຕົກລົງຂອງລັດຖະການສ່ວຍສາອາກອນ ຫລື ອົງການທີ່ມີສິດໜ້າທີ່ກ່ຽວຂ້ອງ.

ໃນກໍລະນີທີ່ບໍ່ມີເງິນ ຫລື ມີເງິນບໍ່ພຽງພໍ ຢູ່ໃນບັນຊີເງິນຝາກທະນາຄານ, ຄັງເງິນ ແລະ ສະຖາບັນການເງິນ ( ສິນເຊື່ອ ) ຄົບຕາມຈຳນວນນັ້ນ ລັດຖະການສ່ວຍສາອາກອນຕ້ອງສະເໜີແຕ່ງຕັ້ງຄະນະກຳມະການ ເພື່ອຍຶດ ຫລື ອາຍັດຊັບສິນຂອງຜູ້ດຳເນີນທຸລະກິດ ເພື່ອຄ້ຳປະກັນການເກັບກູ້ຄືນອາກອນມູນຄ່າເພີ່ມ ແລະ ຄ່າປັບໃໝ ໃຫ້ຄົບຖ້ວນ.

6. ໃນກໍລະນີທີ່ມີການລັກໂລບອາກອນມູນຄ່າເພີ່ມ, ບໍ່ຖືບັນຊີ, ຂາຍສິນຄ້າ, ເຄື່ອງຂອງ ຫລື ໃຫ້ການບໍລິການ ໂດຍບໍ່ອອກໃບເກັບເງິນ, ປອມແປງໃບເກັບເງິນ ຫລື ເອກະສານການບັນຊີອື່ນໆ, ບໍ່ຍອມໃຫ້ເຈົ້າໜ້າທີ່ກວດກາ, ບໍ່ສະເໜີເອກະສານການບັນຊີ, ບໍ່ໃຫ້ຄຳຕອບຕາມກຳນົດເວລາແກ່ລັດຖະການສ່ວຍສາອາກອນທີ່ສະເໜີໃຫ້ສະແດງຫລັກຖານ, ຄຳອະທິບາຍ, ຂໍ້ມູນຂ່າວສານຕ່າງໆ ຈະຖືກປະຕິບັດມາດຕະການ ດັ່ງນີ້:
- ຄັ້ງທີໜຶ່ງ ໃຫ້ມອບອາກອນມູນຄ່າເພີ່ມຄືນໃຫ້ຄົບຖ້ວນ, ປັບໃໝໃນອັດຕາຫ້າສິບສ່ວນຮ້ອຍຂອງຈຳນວນອາກອນທີ່ຄິດໄລ່ໃຫ້ມອບ ແລະເສຍຄ່າປັບໃໝ ຕາມລະບຽບການບັນຊີວິສາຫະກິດ;
- ຄັ້ງທີສອງ ນອກຈາກຈະຕ້ອງມອບອາກອນມູນຄ່າເພີ່ມຄືນໃຫ້ຄົບຖ້ວນແລ້ວ ຍັງຕ້ອງເສຍຄ່າປັບໃໝໃນອັດຕາ ຮ້ອຍສ່ວນຮ້ອຍ ຂອງຈຳນວນອາກອນມູນຄ່າເພີ່ມທີ່ຄິດໄລ່ໃຫ້ມອບ ແລະເສຍຄ່າປັບໃໝຕາມລະບຽບການບັນຊີວິສາຫະກິດ ທັງໃຫ້ຢຸດເຊົາກິດຈະການ ແລ້ວອອກແຈ້ງການທາງສື່ມວນຊົນ;

- ໃນກໍລະນີທີ່ຜູ້ດຳເນີນທຸລະກິດບໍ່ປະຕິບັດມາດຕະການທີ່ກ່າວມາຂ້າງເທິງນີ້ ກໍຈະຖືກດຳເນີນຄະດີຕາມລະບຽບກົດໝາຍ.

7. ໃນກໍລະນີທີ່ມີການສົມຮູ້ຮ່ວມຄິດ ໃນການຫັກອາກອນມູນຄ່າເພີ່ມທີ່ບໍ່ຖືກຕ້ອງ ຈະຖືກປະຕິບັດມາດຕະການ ດັ່ງນີ້ :
   - ຕ້ອງສົ່ງອາກອນມູນຄ່າເພີ່ມຄືນ ໃຫ້ງົບປະມານຢ່າງຄົບຖ້ວນ;
   - ຕ້ອງເສຍຄ່າປັບໃໝໃນອັດຕາ ຮ້ອຍສ່ວນຮ້ອຍ ຂອງຈຳນວນອາກອນມູນຄ່າເພີ່ມ ທີ່ໄດ້ຫັກໄປແລ້ວນັ້ນ ທັງຈະຖືກດຳເນີນຄະດີຕາມລະບຽບກົດໝາຍ.
9. ໃນກໍລະນີທີ່ຜູ້ດຳເນີນທຸລະກິດ ຫລື ບຸກຄົນອື່ນ ຫາກໄດ້ຂັດຂວາງການປະຕິບັດໜ້າທີ່ຂອງລັດຖະການສ່ວຍສາອາກອນ ຫລື ມີພຶດຕິກຳອື່ນໆ ທີ່ເປັນການກະທຳຜິດທາງອາຍາ ກໍຈະຖືກດຳເນີນຄະດີຕາມລະບຽບກົດໝາຍ.

### ມາດຕາ 53. ມາດຕະການຕໍ່ພະນັກງານທີ່ຮັບຜິດຊອບອາກອນມູນຄ່າເພີ່ມ

ພະນັກງານທີ່ຮັບຜິດຊອບອາກອນມູນຄ່າເພີ່ມ ຊຶ່ງມີພຶດຕິກຳທີ່ເປັນການລະເມີດ ຈະຖືກປະຕິບັດມາດຕະການ ດັ່ງນີ້ :

1. ໃນກໍລະນີທີ່ການກະທຳນັ້ນ ຫາກບໍ່ສົ່ງຜົນສະທ້ອນຢ່າງຮ້າຍແຮງຕໍ່ລະບຽບກົດໝາຍ, ລາຍຮັບ ແລະກຽດສັກສີ ຂອງລັດຖະການສ່ວຍສາອາກອນ ແມ່ນຈະຖືກສຶກສາອົບຮົມ ແລະກ່າວເຕືອນ;
2. ໃນກໍລະນີທີ່ມີການຂາດສະຕິຮັບຜິດຊອບ ຫລື ເລິ່ນເລີ້ໃນການປະຕິບັດໜ້າທີ່ ຊຶ່ງກໍ່ໃຫ້ ເກີດຜົນເສຍຫາຍແກ່ຜົນປະໂຫຍດຂອງລັດ ຫລື ແກ່ຜູ້ມອບອາກອນ ແມ່ນຈະຕ້ອງໃຊ້ແທນຄືນຄ່າເສຍຫາຍນັ້ນ ພ້ອມທັງຈະຖືກດຳເນີນຄະດີ ຕາມກໍລະນີເບົາ ຫລື ໜັກ;
3. ໃນກໍລະນີທີ່ມີການສວຍໃຊ້ໜ້າທີ່ຕຳແໜ່ງເພື່ອສົມຮູ້ຮ່ວມຄິດ, ປົກປິດການກະທຳຜິດ ຫລື ມີການກະທຳອື່ນໆ ທີ່ເປັນການລະເມີດລະບຽບກົດໝາຍ ແມ່ນຈະຖືກດຳເນີນຄະດີ ຕາມກໍລະນີເບົາ ຫລື ໜັກ;
4. ໃນກໍລະນີທີ່ມີການສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ສິດອຳນາດເກີນຂອບເຂດ, ປະຕິບັດບໍ່ຖືກຕ້ອງຕາມກົດໝາຍ, ລັກໂລບເອົາເງິນອາກອນມູນຄ່າເພີ່ມ ແລະ ຄ່າປັບໃໝ ແມ່ນຈະຕ້ອງໃຊ້ແທນເງິນອາກອນ ແລະ ຄ່າປັບໃໝ ຄືນໃຫ້ລັດຢ່າງຄົບຖ້ວນ ພ້ອມທັງຈະຖືກດຳເນີນຄະດີທາງອາຍາ.

## ພາກທີ VII

# ບົດບັນຍັດສຸດທ້າຍ

**ມາດຕາ 54. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 55. ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດພາຍຫລັງ ສິບແປດເດືອນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດໍາລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ເລກທີ 04/ສພຊ ລົງວັນທີ 19 ພຶດສະພາ 2005 ກ່ຽວກັບອາກອນຕົວເລກທຸລະກິດເທົ່ານັ້ນ ສໍາລັບຜູ້ດໍາເນີນທຸລະກິດທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ.

ປະທານສະພາແຫ່ງຊາດ